


ໂຮມເລື່ອງສັ້ນ

# ອະທິຖານ
## ດ້ວຍນ້ຳຕາ

ດອກຄູນ ນະ ຊຽງຂວາງ
2020

*ໂຮມເລື່ອງສັ້ນ:* **ອະທິຖານ... ດ້ວຍນ້ຳຕາ**

*ໂດຍ: ດອກຄູນ ນະ ຊຽງຂວາງ*

*ບັນນາທິການ: ພະອາຈານ ປອ. ໄພວັນ ມາລາວົງ*

*ສຳນັກພິມ: ລາວດວງເດືອນ*

*ພິສູດອັກສອນ: ທອງຄູນ ເພັດດາລາ*

*ສິລະປະອອກແບບ: ດອກຄູນ ນະ ຊຽງຂວາງ*

*ທະບຽນພິມ: 189/ວພຈ27112020*

*ພິມທີ່: ໂຮງພິມແທ່ງລັດ*

*ພິມຄັ້ງທີ 1: ທັນວາ 2020, ຈຳນວນ: 1000 ຫົວ*

*ຂະໜາດ: 13x18 ຊມ, ຈຳນວນໜ້າ: 84 ໜ້າ*

*ISBN 978-9932-421-28-2*

*ໂທ: 020 9999-6379, ເຟສບຸກ: ດອກຄູນ ນະ ຊຽງຂວາງ*

*ອີເມວ: dokkhounpdl@gmail.com*

*ຮູບປົກຈາກອິນເຕີເນັດ*

*@ສະຫງວນລິຂະສິດ, ທອງຄູນ ເພັດດາລາ*
*2020*



# ສາລະບັນ

ຄຳນຳສຳນັກພິມ

ຄຳນິຍົມ

ຈາກໃຈຜູ່ຂຽນ

01. ຄາຕະກອນ. 2
02. ເຊືອກຊີວິດ 9
03. ຈຳເປັນ... 15
04. ລາຍງານດອກໄມ້ 23
05. ອະທິຖານ... ດ້ວຍນ້ຳຕາ 30
06. ອະດີດທີ່ໃກ້ເຂົ້າມາ 37
07. ປີກແຫ່ງຮັກ 42
08. ສ້າງພາບ 48
09. ເງາະປ່າປັ້ນຍາປູ້ 55
10. ນາຮົກເທິງດິນ 60

ຄຳຂອບໃຈ

ປະຫວັດຜູ່ຂຽນ

# ຄຳນຳສຳນັກພິມ

**“ອະທິຖານດ້ວຍນ້ຳຕາ”** ເປັນຜົນງານປຶ້ມໂຮມເລື່ອງສັ້ນເຫຼັ້ມໃໝ່ຂອງນັກຂຽນຍິງໄຟແຮງທີ່ມີນາມປາກກາວ່າ “ດອກຄູນ ນະຊຽງຂວາງ” ຖືເປັນເຫຼັ້ມທີ2ທີ່ສຳນັກພິມລາວດວງເດືອນໄດ້ບັນນາທິການກວດຜ່ານເຊິ່ງເວົ້າໄດ້ວ່າວາດຂຽນໃນຄວາມເປັນ“ດອກຄູນ ນະຊຽງຂວາງ” ຍັງຄົງຄວາມເປັນເອກະລັກໄດ້ດີ.

“ອະທິຖານດ້ວຍນ້ຳຕາ” 10 ເລື່ອງສັ້ນ 10 ບັນຫາ ແລະມຸມມອງທີ່ນັກຂຽນຍິງຄົນນີ້ຢາກສື່ອອກມາລ້ວນເປັນບັນຫາທີ່ເກີດຂຶ້ນຈິງໃນສັງຄົມປັດຈຸບັນ ແລະ ເບິ່ງເໝືອນວ່າມັນຈະຊຳເຮື້ອເຖິງຂັ້ນສ້າງຄວາມວຸ້ນວາຍໃນສັງຄົມ .

ບັນຫາຂີ້ລັກງັດແງະຢາເສບຕິດຫຼືຄວາມຮັກທີ່ລະທົມຂົມຂື່ນການມີເມຍນ້ອຍຫ້ອຍເມຍປາຍ ລ້ວນເປັນໄພຂົ່ມຂູ່ຢູ່ໃນສັງຄົມ ອັນພາໃຫ້ເກີດຄວາມບໍ່ສະຫງົບສຸກ “ດອກຄູນນະຊຽງຂວາງ”ສາມາດແນມເຂົ້າເຖິງແກນຂອງບັນຫາ ແລະ ສະທ້ອນອອກມາຢ່າງມີສິລປ໌ໃຊ້ສັບສຳນວນງ່າຍດາຍສຳຜັດໄດ້ງ່າຍອ່ານເພີນ. ຈຶ່ງເວົ້າໄດ້ວ່ານີ້ຄືນັກຂຽນຍິງຜູ້ມີອະນາຄົດໄກ ເພາະມີຄວາມຂະຫຍັນຂັນແຂງໃນການສ້າງສັນງານຂຽນຢ່າງຕໍ່ເນື່ອງ.



ສຳນັກພິມລາວດວງເດືອນ ມີຄວາມພູມໃຈທີ່ໄດ້ຮັບຄວາມໄວ້ວາງໃຈໃນການບັນນາທິການ ສຸດທ້າຍນີ້ຢາກບອກວ່າປຶ້ມ **“ອະທິຖານດ້ວຍນ້ຳຕາ”** ຫົວນີ້ຈະບໍ່ເຮັດໃຫ້ທ່ານຜູ້ອ່ານຜິດຫວັງ ໂດຍສະເພາະແລ້ວກໍແມ່ນແຟນປາກກາຂອງ “ດອກຄູນ ນະ ຊຽງຂວາງ” ຄວນມີໄວ້ໃນມືຖືໄວ້ໃນໃຈ .

**ນະຄອນຫຼວງວຽງຈັນວັນທີ25/11/2020**

**ສຳນັກພິມລາວດວງເດືອນ**

**ຫົວໜ້າບັນນາທິການ**



ປັນຍາ ພັນທະພານິດ



# ຄຳນິຍົມ

ເມື່ອຫຼາຍປີຜ່ານມາເຫັນນັກກະວີ ນັກປະພັນໜຸ່ມນ້ອຍ ເກີດຂຶ້ນຢ່າງຫຼວງຫຼາຍ ແລະມີຜົນງານອອກມາຢ່າງຕໍ່ເນື່ອງແກ່ອຸທິຍານວັນນະກຳຂອງລາວຢ່າງໜ້າພາກພູມໃຈ ສະແດງວ່າ ແວດວົງການອ່ານ ການຂຽນຂອງລາວ ສັງຄົມໃຫ້ຄວາມສົນໃຈດີຂຶ້ນຕາມດຳລັບ…

ດອກຄູນ ນະ ຊຽງຂວາງ ເປັນນັກປະພັນໜຸ່ມນ້ອຍໄດ້ສ້າງສັນຜົນງານອອກມາຢ່າງຕໍ່ເນື່ອງ ໄດ້ມີຜົນງານທັງເລື່ອງສັ້ນ ບົດບັນທຶກ ແລະຈະພິມນະວະນິຍາຍໃນຄັ້ງຕໍ່ໆໄປການເປັນຄົນມັກອ່ານມັກສະແຫວງຫານັກປາດອາຈານແນ່ນອນເສັ້ນທາງການຂີດຂຽນຍ່ອມໄປໄດ້ໄກ ແລະກ້າວໜ້າ.

ເລື່ອງສັ້ນ 10 ເລື່ອງທີ່ ດອກຄູນ ນະ ຊຽງຂວາງ ປະພັນຂຶ້ນນີ້ ແມ່ນເລື່ອງໃກ້ຕົວໃນຊີວິດປະຈຳວັນ ແຕ່ຝັງແງ່ຄິດປັດຊະຍາ ຄະຕິຄຳສອນຜ່ານຕົວລະຄອນ ເດີນຜ່ານເລື່ອງເຄົ້າໂຄງ… ຄົນຍຸກໃໝ່ ນັກຂຽນໃໝ່ ມີເລື່ອງເລົ່າໃໝ່ໆ



ຜ່ານເລື່ອງລາວເຂົ້າມາໃນຊີວິດ ເພາະນັກປະພັນຄືນັກເລົ່າເລື່ອງນຳສະເໜີໃນແງ່ສິລະປະນັ້ນເອງ….

ທ່ານລອງສຳຜັດເບິ່ງ ວາດລີລາ ສິລະປະການປະພັນຂອງນັກຂຽນຍິງທ່ານນີ້ຮັບຮອງບໍ່ຜິດຫວັງ !!!

**ລູກດອນກະເດັນ**

ນັກກະວີຊີໄຣ 2019

ນັກກະວີສິນໄຊ 2017

ນັກກະວີແມ່ນ້ຳຂອງ 2015

# ຈາກໃຈຜູ່ຂຽນ

**"ອະທິຖານ...ດ້ວຍນ້ຳຕາ"** ໂຮມເລື່ອງສັ້ນເຫຼັ້ມນີ້ຂຽນຂຶ້ນຈາກໂຄງເລື່ອງຈິງທີ່ເກີດຂຶ້ນກັບຕົວຜູ່ຂຽນເອງ ແລະເກີດຂຶ້ນກັບສັງຄົມມະນຸດໃນປັດຈຸບັນ

ຖ້າຈະຖາມເຖິງແຮງບັນດານໃຈທີ່ຂຽນເຫຼັ້ມນີ້ຂຶ້ນມາຄົງໜີບໍ່ພົ້ນ **ຄວາມເຈັບປວດ** ເຈັບປວດກັບເລື່ອງໂຫດຮ້າຍທີ່ຕ້ອງພົບເຈີການສູນເສຍໃນຊີວິດ ເຈັບປວດທີ່ໄດ້ເຫັນສັງຄົມດ້ານມືດເລີ່ມແຜ່ອິດທິພົນຂະຫຍາຍວົງກວ້າງ ແລະກໍຈະເຈັບປວດກວ່າຖ້າບໍ່ໄດ້ຂຽນເຫຼັ້ມນີ້ຂຶ້ນມາ

ເຊິ່ງຈາກທິດສະດີຂອງນັກປາດຫຼາຍໆທ່ານ ກໍໄດ້ໃຫ້ຂໍ້ສະຫຼຸບຂອງຄວາມເຈັບປວດໄວ້ວ່າ ຄືມີຢູ່ **ສາມຂັ້ນ ແລະ ສີ່ລະດັບ** ດັ່ງນີ້:

**ຂັ້ນນຶ່ງ** ເມື່ອເຈັບປວດເຮົາຈະສົ່ງຕໍ່ຄວາມເຈັບປວດນັ້ນໃຫ້ຄົນອື່ນ ເຊິ່ງຈະມີໃຫ້ເຫັນຫຼາຍໃນສັງຄົມ ຕົວຢ່າງງ່າຍໆ ເວລາເຮົາຖືກເຈົ້ານາຍຮ້າຍ ຫຼືຕຳນິຢູ່ຫ້ອງການ ເຮົາກໍມັກຈະສົ່ງຕໍ່ຄວາມເຈັບນັ້ນອອກໄປໃຫ້ຄົນອື່ນທັນທີ ບໍ່ວ່າຈະເປັນຫາຸດຫາິດໃສ່ເພື່ອນຮ່ວມງານ ຫຼືບໍ່ເວັ້ນແຕ່ເອົາອາລົມຮ້າຍໆໄປລົງໃສ່ຄົນຮັກ ເປັນຕົ້ນ



**ຂັ້ນສອງ** ເມື່ອເຈັບປວດເຮົາຈະປ່ຽນຄວາມເຈັບປວດໃຫ້ເປັນພະລັງຂອງການປ່ຽນແປງ ເພື່ອພັດທະນາຕົວເອງ ເຊັ່ນເມື່ອເຮົາເຈັບປວດທີ່ຖືກຄົນຮັກຖິ້ມເຮົາຈຶ່ງດູແລຕົວເອງ ຮັກຕົວເອງ ຫຼືເຫັນຄ່າຕົວເອງຫຼາຍຂຶ້ນນັ້ນເອງ

**ຂັ້ນສາມ** ເມື່ອເຮົາເຈັບປວດເຮົາຈະກ້າວຜ່ານມັນໄປເລີຍ ໂດຍທີ່ບໍ່ຕ້ອງສົ່ງຕໍ່ຄວາມເຈັບປວດໃຫ້ໃຜ ຫຼືຕ້ອງປ່ຽນຄວາມເຈັບປວດໃຫ້ເປັນພະລັງໃນການປ່ຽນແປງໃດໆ ເຊິ່ງໜ້ອຍຄົນທີ່ຈະເຮັດໄດ້ເຖິງຂັ້ນນີ້ ເພາະຄວາມເຈັບປວດມັນມີພະລັງທີ່ຍິ່ງໃຫຍ່ທັງທາງບວກ ແລະລົບ ອີກຢ່າງຄົນເຮົາຕ່າງກໍມີຈິດທີ່ຕ່າງລະດັບກັນ ທັງນີ້ແມ່ນຂຶ້ນກັບການເຝິກຂອງເຮົາເອງ

ສຳລັບຜູ່ທີ່ບໍ່ເຄີຍເຝິກຈິດເລີຍ ຫຼືຢູ່ໃນ**ລະດັບທີນຶ່ງ** ເມື່ອເຈີຄວາມເຈັບປວດກໍຈະເໝືອນມີດປາດລົງຜິວໜັງ ເຊິ່ງທັງເຈັບປວດ ແລະມີແຜເປັນທີ່ດົນ

ສ່ວນຜູ່ທີ່ຜ່ານການເຝິກຈິດມາແດ່ແລ້ວນັ້ນ ຫຼືຢູ່ໃນ**ລະດັບທີສອງ** ເມື່ອເຈີກັບຄວາມເຈັບປວດກໍຈະເໝືອນມີດທີ່ປາດລົງກອງຊາຍ ພຽງແຕ່ມີລົມພັດຜ່ານບໍ່ດົນຮອຍນັ້ນກໍຈາງຫາຍ

ສຳລັບຜູ່ທີ່ເຝິກຈິດໄດ້ລະດັບນຶ່ງແລ້ວ ຄືຢູ່ໃນ**ລະດັບທີສາມ** ເມື່ອເຈີຄວາມເຈັບປວດກໍຈະເໝືອນມີດປາດລົງໜ້ານ້ຳ ທີ່ໃຊ້ເວລາບໍ່ເຖິງສອງວິນາທີ ຮອຍນັ້ນກໍຈະຈາງຫາຍໄປ



ແລ້ວສຳລັບຜູ່ທີ່ສາມາດເຝິກຈິດໄດ້ໃນລະດັບສູງແລ້ວນັ້ນ ຄື **ລະດັບທີສີ່** (ອາດທຽບເທົ່າພຣະອໍລະຫັນ)ເມື່ອຕ້ອງເຈີກັບຄວາມເຈັບປວດ ກໍຈະເໝືອນມີດທີ່ປາດໄປໃນອາກາດທີ່ບໍ່ມີຄວາມຮູ້ສຶກ ຫຼືຮອຍບາດແຜໃດໆໃຫ້ເຫັນ

ແລະຈຸດປະສົງຫຼັກທີ່ຂຽນປຶ້ມເຫຼັ້ມນີ້ກໍເພື່ອບໍ່ຢາກສົ່ງຕໍ່ຄວາມເຈັບປວດອອກໄປໃຫ້ຄົນອື່ນ ແລະກໍຫວັງວ່າຄົນທີ່ໄດ້ອ່ານປຶ້ມເຫຼັ້ມນີ້ຈະມີຄວາມຄິດເໝືອນກັນ ຄວາມຄິດທີ່ວ່າຢາກເຫັນສັງຄົມຢຸດສົ່ງຕໍ່ຄວາມເຈັບປວດໃຫ້ແກ່ກັນ ແລະກັນກໍເພື່ອທີ່ເຮົາທຸກຄົນຈະໄດ້ກ້າວຜ່ານມີດປາດຜິວໜັງນັ້ນໄປພ້ອມໆກັນ.!!

8 ເມສາ 2020
ທີ່ ແກ້ວກູ່ ແຂວງ ວຽງຈັນ
ດອກຄູນ ນະ ຊຽງຂວາງ





“ປ້າພອນ! ປ້າພອນ! ມາໄວ ໄປເບິ່ງລູກຊາຍແມ່ໝັ້ນ ເຂົາວ່າຖືກຜີເຂົ້າຊັກບ້າພໍປານໝູຖືກຢາເບືອຢູ່ຫັ້ນ!”

“ແມ່ນແທ້ຫວາຈິດ?” ປ້າພອນຖາມຄືນດ້ວຍຄວາມຕົກໃຈ

“ແມ່ນແທ້ໆ ເຂົາແຫ່ກັນໄປເບິ່ງພຸ້ນໝົດແລ້ວ ຮີບມາ” ເວົ້າແລ້ວທ້າວຄຳລູກຊາຍປ້າພອນທີ່ນັ່ງຟັງນຳແຕ່ຕົ້ນຢູ່ເຊຍເຮືອນ ກໍຟ້າວຕະຫຼູດຮາວຂັ້ນໄດລົງຈຳຂີ້ດິນກ່ອນແມ່ ພໍປານເດັກນ້ອຍຫຼິ້ນຂີ່ກາບກ້ວຍລົງຕາມແຄມຝັ່ງໃນຍາມຝົນ.

ທ່າມກາງເດີ່ນບ້ານຜູ່ຄົນອັ່ງອໍຢູ່ຢ່າງຄັບຄາໜາແໜ້ນປານປາງບຸນໃຫຍ່ ສຽງໂສເຫຼ່ດັງສະນັ່ນໄປທົ່ວ ທຸກສາຍຕາຈັບຈ້ອງໄປຍັງຊາຍໜຸ່ມຜູ່ທີ່ກຳລັງນອນດີ້ນຄົດຂໍຢູ່ເທິງຕຽງ.

“ຟ້າວເອົາລາວໄປໂຮງໝໍລະແມ່!” ຄຳເວົ້າຂຶ້ນໂດຍທັນທີ.

“ໄປໂຮງໝໍເຂົາກະຊິຊ່ອຍຫຍັງໄດ້ ແນວຜີເຂົ້າເຈົ້າສູນ





ນ່າ! ເບິ່ງຕາມັນຫັ້ນແມ່ຂວາງບໍ່ຂວາງນິ!ຂອບຕາກະດຳປື້ໆ ຕີນມືກະເກັ່ງແຂງຈັກງັກຜີເຂົ້າແທ້ໆແນວນີ້ນ່າ ຟ້າວໄປນຳພໍ່ໝໍມື້ມາລະແມ່!”ຫົວໜ້າບ້ານເວົ້າຕັດຂຶ້ນດ້ວຍສີໜ້າເຄັ່ງຄຶມ.

“ແມ່ນ! ແມ່ນ! ແມ່ນ! ຜີເຂົ້າແທ້ໆແນວນີ້ນ່າ” ໄທບ້ານພ້ອມເວົ້າເປັນສຽງດຽວກັນ.

ຫຼັງຈາກນັ້ນບໍ່ດົນພໍ່ໝໍມືກໍມາຮອດ ແລ້ວກໍເລີ່ມທຳພິທີກຳຕ່າງໆທັງຫົດນ້ຳມົນຈົນເກືອບໝົດຂັນ, ຫວ່ານເຂົ້າສານເສກກໍຈົນພໍລັ່ງໄກ່ອີ່ມເປັນຄອກ, ອີກທັງສາຍສິນທີ່ພັນອ້ອມໂຕຢາກວ່າພໍຕ່ຳແຜ່ນແພໄດ້ເປັນຜືນພຸ້ນລະ! ແຕ່ຜີກໍບໍ່ຍອມອອກ.

“ເອົາລາວໄປໂຮງໝໍພຸ້ນນ່າ” ຄຳເວົ້າຂຶ້ນຕື່ມ.

“ຜີໂຕນີ້ຮ້າຍແທ້ເນາະ ຂັ້ນພໍ່ໝໍມືຍັງເອົາບໍ່ຢູ່ລະເປັນຕາຢ້ານແທ້ສູ ມັນຊິບໍ່ມາເຂົ້າເຮົາຕື່ມຫວາໄປຫຍັບອອກໆ” ໄທບ້ານເຊື່ອໝົດໃຈວ່າແມ່ນຜີເຂົ້າແທ້ໆ ໂດຍບໍ່ຫົວຊານຳຄຳເວົ້າຂອງຄຳແມ່ນແຕ່ໜ້ອຍ.

ເວລາຜ່ານໄປບໍ່ດົນ ທ້າວແດງຜູ່ທີ່ເຂົາວ່າຖືກຜີເຂົ້າກໍຫຼອນຮ້ອງຂຶ້ນໝົດແຮງ ທັງລຸກຂຶ້ນດຶງຟາດສາຍສິນທີ່ພັນອ້ອມໂຕອອກ ແລ້ວຍ່າງເຊຊ້າຍເຊຂວາບໍ່ຕ່າງຫຍັງກັບໄກ່ຖືກຄ້ອນບ້າປ່ວງໄປທາງເຮືອນຮ້າງຂ້າງປ່າຊ້າ ແລ້ວຈາກນັ້ນຮ່າງທີ່ຈ່ອຍຜອມໂຊກໍຊົງຕົວບໍ່ຢູ່ລົ້ມປ່າງງ່າງລົງຕໍ່ໜ້າ ໄທບ້ານທີ່ແຫ່ກັນນຳໄປເບິ່ງ

“ຕາຍແລ້ວ ຕາຍແລ້ວ ລູກກູຕາຍແລ້ວ”ແມ່ໝັ້ນຮ້ອງຂຶ້ນພ້ອມຊຸດໂຕລົ້ມລົງຂ້າງລູກຊາຍ ສອງມືຄ່ອຍໂຈມຫົວລູກ





ຂຶ້ນມາໂອບກອດແນບໄວ້ກາງເອິກ ທັງນ້ຳຕາບໍ່ຈັກຂີ້ມູກໄຫຼອອກຊະໆ ນະເວລານັ້ນຄົງຫາຄວາມເຈັບປວດໃດມາທຽມເທົ່າແມ່ນບໍ່ມີອີກແລ້ວໃນຫົວອົກຂອງຄົນເປັນແມ່ ແລ້ວຈາກນັ້ນໄທບ້ານກໍຊ່ອຍກັນໂຈມເອົາແມ່ໝັ້ນລຸກຂຶ້ນ ແລະພວກຜູ່ຊາຍກໍພ້ອມກັນຫາມເອົາຮ່າງໄຮ້ວິນຍານຂອງທ້າວແດງກັບເມືອໄວ້ເຮືອນເພື່ອທຳພິທີທາງສາສະໜາ ທ່າມກາງຄວາມໂສກເສົ້າ ແລະຢ້ານກົວຂອງໄທບ້ານ.

“ກູລະຢາກໃຫ້ຜີໄປທັກຄໍພວກນັກເລງ ຂີ່ລົດສຽງດັງໆເລາະບ້ານກວນເມືອງຫັ້ນເດເນາະ!” ໄທບ້ານຜູ່ນຶ່ງເວົ້າພ້ອມເຫຼືອດຕາໄປຫາທ້າວຄຳ.

“ທຸກຄົນຕ່າງກໍຮູ້ກັນດີຢູ່ແລ້ວເນາະ ວ່າຕອນນີ້ບ້ານເມືອງເຮົາບໍ່ສະຫງົບຄືແຕ່ກ່ອນແລ້ວ ພວກຜີປີສາດອອກອາລະວາດໜັກ ມື້ກ່ອນຫັ້ນກໍເຂົ້າສູນລູກຊາຍປ້າທິບຢູ່ຕະຫຼາດຈັບມີດໄລ່ຂ້າໄລ່ຟັນຄົນໄປທົ່ວ”

“ແລ້ວພວກເຮົາຊິເຮັດແນວໃດລະບາດນີ?” ສຽງລູກບ້ານຜູ່ນຶ່ງເວົ້າຕັດຂຶ້ນ.

“ເອົາເປັນວ່າຊ່ວງນີ້ໂດຍສະເພາະຍາມມື້ຄ່ຳມື້ຄືນຢ່າພາກັນອອກນອກເຮືອນເດີຖ້າບໍ່ຈຳເປັນເຫັນຫຍັງຕ່າງຫູຕ່າງຕາ ກໍຢ່າໄປທັກໄປທ້ວງ ເຂົ້າໃຈບໍ່!”ຄຳເວົ້າຂອງຫົວໜ້າບ້ານຍິ່ງເພີ່ມຄວາມຢ້ານກົວໃຫ້ໄທບ້ານເປັນທະວີຄູນ.

ກອງປະຊຸມຜ່ານໄປດົນເຕີບ ກ່ອນທຸກຄົນຈະແຍກຍ້າຍກັນກັບເຮືອນໃຜລາວດ້ວຍຄວາມຫວາດຜະຫວາ ຕ່າງກໍ





ຢ້ານກົວຕໍ່ອຳນາດທີ່ມອງບໍ່ເຫັນ ເພາະບໍ່ເຄີຍເກີດເຫດການແບບນີ້ຂຶ້ນ ໄທບ້ານຕ່າງກໍຄຶດກັນໄປທົ່ວບາງກໍວ່າອາດຈະແມ່ນຜີແມ່ໝ້າຍກໍມີ ຜີນາງຕານີກໍວ່າ ທັງຜີບັງບົດພ້ອມ ແລະຜີອື່ນໆອີກແລ້ວແຕ່ໃຜຈະຄຶດອອກ

ດ້ວຍຄວາມຢ້ານໄທບ້ານຈຶ່ງພ້ອມໃຈກັນເຮັດພິທີກຳຕ່າງໆຂຶ້ນ ທຸກຫຼັງຄາເຮືອນແມ່ນມີສາຍຝ້າຍມົງຄຸນອ້ອມຮອບທັງປະຕູປ່ອງຢ້ຽມກໍມີງ່າໝາກກະທັນ ພ້ອມເປືອກຕົ້ນລີ້ນໄມ້ມັດຕິດຢູ່,ບາງເຮືອນກໍມີຮັງຕໍ່ຮັງແຕນຮ້າງຫ້ອຍຢູ່ຕາມຄວາມເຊື່ອໃຜລາວ, ອີກທັງຝ້າຍດຳແດງຂາວມັດຢູ່ເຕັມແຂນ ແລະ ຄໍ.

ນະເວລານັ້ນຍາມກາງຄືນມາພໍຕາເວັນຕົກດິນ ກໍຢາກວ່າບໍ່ມີໃຜກ້າອອກນອກເຮືອນເລີຍເພາະສຽງໝາທີ່ພາກັນເຫົ່າຫອນຊອກຫາຄູ່ຢູ່ທົ່ວບ້ານ ບອກໃສ່ບັນຍາກາດເຢັນໆ ແລະຄວາມມືດມິດມັນກໍຊວນໃຫ້ຂົນຄີງລຸກນຳບໍ່ໜ້ອຍ ຖ້າບໍ່ທໍ່ວ່າມີແສງໄຟຈາກໃນເຮືອນກໍສ່ຳກັບໝູ່ບ້ານຮ້າງດີໆນີ້ເອງ

“ເປັນຈັ່ງໃດບັກອວດເກັ່ງຜີກະບໍ່ທັກຄໍຕາຍສາເນາະ” ຄຳເວົ້າທຳອິດຂອງພໍ່ເມື່ອເຫັນຄຳແລ່ນຂຶ້ນມາເຮືອນດ້ວຍຄວາມຟ້າວຟັ່ງ ຄືກຳລັງແລ່ນໜີຫຍັງມາ.

“ຍັງບໍ່ພາກັນນອນປານນີ້ຫວາ ຟ້າວໄປນອນລະແມ” ເວົ້າແລ້ວຄຳກໍຟ້າວອັດປະຕູລັອກຢ່າງດີແລ້ວເຂົ້າຫ້ອງນອນໄປ ໂດຍບໍ່ບອກພໍ່ແມ່ຈັກຄຳວ່າຕົນໄປເຈີຫຍັງມາ.

. . . . . . . . . . . . . . . .

"ກະພໍລູກພໍ່ຍໍໄດ້ລະຕິຊິນອນເອົາໃບຕາດິນຫວາ ໂອ່ຍນໍ້! ມີລູກນຳເຂົາຜູ່ດຽວກະເປັນລູກເທວະນາຊໍ້າ" ເວົ້າແລ້ວຜູ່ເປັນພໍ່ກໍໄຂປະຕູຫ້ອງເຂົ້າໄປເບິ່ງ ປາກົດວ່າບໍ່ເຫັນໃຜເລີຍ

"ແມ່ມັນເຈົ້າຮູ້ບໍບັກຄຳມັນໄປໃສ ຢູ່ຫ້ອງບໍ່ມີໃດ໋?"

"ແຕ່ເຊົ້າມາຂ້ອຍກໍຍັງບໍ່ເຫັນມັນເທື່ອ"ສອງເຖົ້າແນມເບິ່ງໜ້າກັນດ້ວຍສີໜ້າສຸດສົງໄສ

"ໂອ່ຍ! ຈັກແມ່ນໄປໃສແຕ່ເຊົ້າເທົ່າຄໍ່າ ປານນີ້ຍັງບໍ່ມາບ້ານເມືອງແຮ່ງເປັນຕາຢ້ານປານນີ້" ປ້າພອນເວົ້າຂຶ້ນດ້ວຍນ້ຳສຽງທີ່ສັ່ນແກມສະອື້ນ.

ຫຼາຍຊົ່ວໂມງຜ່ານໄປຈົນໄກ່ຂັນກົກຄຳກໍຍັງບໍ່ມາສອງເຖົ້າກໍບໍ່ສາມາດບັງຄັບເປືອກຕາໃຫ້ຫຼັບລົງໄດ້ ແລ້ວບໍ່ດົນກໍໄດ້ຍິນສຽງຜູ່ຄົນໂຮ່ຮ້ອງດັ່ງອຶກກະທຶກມາແຕ່ໄກສອງເຖົ້າບໍ່ລໍຊ້າຟ້າວອອກໄປເບິ່ງທັນທີ .

"ເຖົ້າໆບັກຄຳລູກເຮົາລະບໍ່ຫັ້ນນ່າມີຕຳຫຼວດມານຳແດ່ບໍ່ແມ່ນມັນໄປລັກເຄື່ອງເຂົາເບາະ ໄປໆເຖົ້າ ໄປເບິ່ງ! " ທັງສອງເຖົ້າຟ້າວແລ່ນໄປຫາດ້ວຍຄວາມສົງໄສ ແຕ່ທັງໝົດກໍໄດ້ຂຶ້ນລົດອອກໄປກ່ອນແລ້ວ.

"ໄປ! ລຸງພູ ນຳພວກເພິ່ນໄປເມືອງພຸ້ນຕຳຫຼວດພາພວກເຂົາໄປເມືອງແລ້ວ" ໄທບ້ານຜູ່ນຶ່ງຮ້ອງໃສ່ພໍ່ຂອງຄຳພ້ອມບອກໃຫ້ຂຶ້ນລົດ

"ເຈົ້າໄປຖ້າຟັງຂ່າວຢູ່ເຮືອນເດີເຖົ້າ ອັດປະຕ່າງປະຕູດີໆແດ່!" ເວົ້າແລ້ວລຸງພູກໍໂກ້ຍຂຶ້ນລົດອອກໄປ





"ມຶງໄປເຮັດຫຍັງຜິດອີກແລ້ວ ບໍ່ແມ່ນໄປຊອກລັກເຄື່ອງຂະໂມຍຂອງເຂົາຫວາ ຣື!ເກີດມາເປັນມື້ມີແຕ່ສ້າງບັນຫາ" ລຸງພູເວົ້າດ້ວຍຄວາມເຫຼືອໃຈຕໍ່ລູກຊາຍ.

"ໃຈເຢັນໆກ່ອນລຸງເອີ່ຍ! ຟັງຂ້ອຍກ່ອນ ທ້າວຄຳລາວບໍ່ໄດ້ເປັນຜູ່ຮ້າຍອ້າຍຂະໂມຍຫຍັງດອກ ກົງກັນຂ້າມລາວຍັງຊ່ອຍຕຳຫຼວດຈັບຜີຄາຕະກອນອີກໃດ໋!"

"ແມ່ນແທ້ຫວາ! ໃສ! ຢູ່ໃສລະຜີຄາຕະກອນຫັ້ນ?"ໄທບ້ານເວົ້າພ້ອມຫຼຽວຫາ.

"ຫັ້ນເດ ຜີຄາຕະກອນ"

"ຣື! ແມ່ນຫຍັງຫັ້ນ! ເປັນທໍ່ໆສາ ເມັດນ້ອຍໆແດງໆຫັ້ນແມ່ນຫຍັງ ຢາມ້າຫວະ?"

"ແມ່ນແລ້ວ! ທີ່ທ້າວແດງຕາຍຫັ້ນເພາະລາວເສບຢາເກີນຂະໜາດເລີຍຊ໊ອກ ແລ້ວທີ່ວ່າມີຜີເຂົ້າເຮັດໃຫ້ຄົນກາຍເປັນບ້າ ໄລ່ຂ້າໄລ່ຟັນກັນນັ້ນກໍເພາະເຂົາຢາກຢາເຮັດໃຫ້ເກີດພາບຫຼອນຄືຊິມີຄົນມາທຳຮ້າຍເຈົ້າຂອງ ແລະທຸກເຫດການທັງໝົດທີ່ເກີດຂຶ້ນສາເຫດກໍເພາະຢາມ້າໂຕດຽວນີ້ແຫຼະ ທີ່ພາກທັງຊີວິດ ທັງຕັດອະນາຄົດລູກຫຼານພວກເຈົ້າໄປ ແລ້ວຢາກຮູ້ບໍ່ວ່າຫົວໜ້າຜີຄາຕະກອນແມ່ນໃຜ?"

"ແມ່ນໃຜໆ?"

"ຫັ້ນເດ! ຢູ່ໃນຄຸກຫັ້ນເດະ!" ທຸກຄົນຫຼຽວໄປເບິ່ງ ພ້ອມເວົ້າຂຶ້ນພ້ອມກັນ

"ຫົວໜ້າບ້ານ!"








ແສງແດດກ້າກາງເດືອນພຶດສະພາອັນຮ້ອນອົບເອົ້າກະຈາຍລັງສີແຜດເຜົາຜືນແຜ່ນດິນ ປານອັກຄີພວມໄໝ້ລາມຜືນປ່າໃຫ້ມອດມ້ວຍ ສາຍລົມຫອບອູ້ມອາຍຮ້ອນຈາກທາງຄອນກຣີດພັດໂຊຍກະທົບຜິວກາຍຈົນແດງກ່ຳ ຢາດເຫື່ອທີ່ໄຫຼອາບຄີງຈົນປຽກຊຸ່ມ ອ້ອມແຂນກອດອູ້ມດວງໃຈນ້ອຍໆໄວ້ກາງເອິກ ແວວຕາທີ່ເຕັມໄປດ້ວຍຄວາມເຈັບປວດ ຄວາມນ້ອຍເນື້ອຕ່ຳໃຈຕໍ່ໂຊກຊະຕາ ແຕ່ຂາທັງສອງກໍບໍ່ຍອມຢຸດເດີນ ເພື່ອພາດວງໃຈໄປເຖິງຈຸດໝາຍທີ່ຍັງຍາວໄກ

"ຈອດແດ່ໆ ໄປສົ່ງພວກຂ້ອຍແດ່ທ້ອນຢູ່... "

"ບໍ່ໆ! ເບິ່ງລູກເຈົ້າຊົງຊິບໍ່ລອດຈັກໜ້ອຍຊິມາຕາຍໃສ່ລົດຂ້ອຍ..."

ເປັນຄຳຕອບເທື່ອທີ 1, 2, 3 ບໍ່ແມ່ນ, ເທື່ອທີ 4, 5 ແລ້ວຕ່າງຫາກສອງສາຍຕາປະສານກັນດ້ວຍຄວາມເຈັບປວດທຸກເວທະນາພ້ອມນ້ຳຕາຊືມ ແຂນເສື້ອເກົ່າໆເຮັດໜ້າທີ່ກວາດ

ເຊັດຢາດນ້ຳຕາໂດຍໄວພ້ອມສຽງສະອື້ນ ກືນທຸກຄວາມເຈັບປວດລົງໄປເກັບໄວ້ໃຫ້ເລິກສຸດກົ້ນບຶ້ງຂອງຫົວໃຈ

ສາຍຕາແນມໄປທາງໜ້າຜ່ານແປວຮ້ອນເທິງຖະໜົນ ມີພຽງແກັດເຈັ້ຍເກົ່າໆ ທີ່ໃຊ້ບົດບັງແສງແດດໃຫ້ຮ່າງກາຍນ້ອຍໆທີ່ພວມນອນຫຼັບສະໜິດໃນອ້ອມກອດເໝືອນຮ່າງໄຮ້ວິນຍານ...

ໄລຍະທາງກວ່າ 15 ກິໂລແມັດເຕັມໄປດ້ວຍລົດລາງນັບບໍ່ຖ້ວນ ທັງລົດຈັກ ລົດຕູ້ ລົດກະບະ ລົດເມ ລົດສອງແຖວ ລົດວີໂກ້... ສາລະພັດລົດທີ່ແລ່ນສົນກັນໄປມາ ແຕ່ຫາກບໍ່ມີຈັກຄັນເລີຍທີ່ຈະຢຽບເບກ ເພື່ອໄຂປະຕູຮັບເອົາທັງ 3 ຊີວິດໄປສົ່ງປາຍທາງ

. . . . . . . . . . . . . .

ຮ່າງນ້ອຍໆທີ່ອ່ອນນຸ່ມບໍລິສຸດທັງແຂນ ຂາ ແລະຄໍເຕັມໄປດ້ວຍຮອຍຊ້ຳຈາກປາຍເຂັມທີ່ສຽບແທງຜິວໜັງທະລຸເຂົ້າໄປເຖິງເສັ້ນເລືອດດ້ານໃນ ເພື່ອນຳໄປວິນິດໄສຫາສາເຫດຂອງອາການທີ່ເກີດຂຶ້ນດັ່ງກ່າວ

"ເສຍໃຈນຳເດີ! ລູກພວກເຈົ້າຄົງຢູ່ນຳໄດ້ອີກບໍ່ດົນແລ້ວ"

ຂາສອງຂ້າງອ່ອນແຮງຕຸບ ຮ່າງກາຍທີ່ໃຈກຳລັງຈະສະຫຼາຍລົ້ມລົງ ແຂນທັງສອງຂ້າງທີ່ແຂງແກ່ນຂອງຜູ່ທີ່ຂຶ້ນຊື່ວ່າເປັນຫົວໜ້າຄອບຄົວ ຟ້າວເຮັດໜ້າທີ່ໂອບຮັບໄວ້ທັນທີ ນ້ຳຕາແຫ່ງຄວາມເຈັບປວດໄຫຼລົ້ນອອກມາ ແວວຕາໄຮ້ເຊື່ອແສງ





ສະຫວ່າງຍ້ອນຢາດນ້ຳຕາບົດບັງ

ໄຂປະຕູເຂົ້າໄປຫາຮ່າງທີ່ນອນຫາຍໃຈເໝືອນປາທີ່ກຳລັງຈະຂາດນ້ຳຢູ່ເທິງຕຽງຜ້າປູສີຟ້າແກ່ດ້ວຍຄວາມອາໄລ ສອງແຂນຫອບອູ້ມຮ່າງນັ້ນຂຶ້ນມາກອດໄວ້ກາງເອິກ ແນມໜ້ານ້ອຍໆທີ່ພວມຫຼັບໄຫລດ້ວຍຄວາມຮັກ ແລະ ຄວາມຫວັງຢາກໃຫ້ມີປາຕິຫານເກີດຂຶ້ນຈັກຄັ້ງໃນຊີວິດ

"ພາລູກເຮົາເມືອເຮືອນເທາະ! ເພິ່ນບໍ່ສາມາດປົວລູກເຮົາໄດ້ແລ້ວ... "

ຄຳເວົ້າພ້ອມນ້ຳຕາທີ່ບົ່ງບອກເຖິງຄວາມເຈັບປວດທໍລະມານ ຄົງບໍ່ຕ່າງຈາກມີດແຫຼມຄົມທີ່ກຳລັງສຽບແທງເຂົ້າໄປຕັດຂົ້ວຫົວໃຈໃຫ້ຂາດລົງເທື່ອລະໜ້ອຍໆຢ່າງທໍລະມານ

. . . . . . . . . . . . . .

ເວລາ 3-4 ຊົ່ວໂມງທີ່ສອງຂາພາຮ່າງກາຍກ້າວຜ່ານຕຶກອາຄານສູງ ໂຮງແຮມນ້ອຍໃຫຍ່ ຮ້ານອາຫານ ຮ້ານກິນດື່ມ ຮ້ານກາເຟ ຮ້ານເຂົ້າໜົມສາລະເປົາ ເຕັ້ນຂາຍເຄື່ອງ ລົດກະບະ ທັງລໍ້ທີ່ບັນຈຸໝາກໄມ້ນາໆຊະນິດຈອດລຽນກັນຊ່າຍລ່າຍຕາມແຄມຖະໜົນພ້ອມສຽງເພັງຈາກຫຼາຍທິດທາງທີ່ເສບກ່ອມຜູ່ຄົນມາກໜ້າຫຼາຍຕາ ມີທັງຂັບລົດຈັກ ທັງລົດໃຫຍ່ ບາງກໍຂີ່ລົດຖີບ ແລະ ບາງກໍຍ່າງສວນກັນໄປມາບໍ່ຕ່າງຈາກຝູງມົດທີ່ພວມຍ້າຍຮັງຍາມຝົນ, ແຕ່ຈະມີຈັກຊີວິດທີ່ຕ້ອງເຈັບປວດໄປກັບທຸກກ້າວຍ່າງ ເພື່ອຂ້າມຜ່ານຊ່ວງເວລາໂຫດຮ້າຍນີ້ໄປໄດ້





ກິ່ນຫອມ ແລະ ຄວາມງາມຂອງດອກໄມ້ ສຽງດົນຕີທີ່ຂັບກ່ອມຈາກສິນລະປິນສອງປີກ ສາຍລົມ ແສງແດດ... ທຸກຢ່າງຊ່າງງົດງາມ ແຕ່ສອງຫົວໃຈສຳຜັດມັນບໍ່ໄດ້ເລີຍ

"ເສັ້ນເລືອດໃນສະໝອງແຕກ..."ຄຳຕອບຂອງພໍ່ຜູ່ທີ່ຍ່າງອູ້ມລູກຊາຍກັບມາເຖິງເຮືອນດ້ວຍໄລຍະທາງກວ່າ 15 ກິໂລແມັດ

"ແລ້ວເຮົາຊິເຮັດແນວໃດຕໍ່ໄປ ຊິປົວລູກດ້ວຍວິທີໃດ" ຜູ່ເປັນເມຍຖາມດ້ວຍນ້ຳສຽງສະອື້ນ

"ບໍ່ຮູ້! ຮູ້ແຕ່ຂ້ອຍຈະເຮັດທຸກວິທີທາງຈົນສຸດຄວາມສາມາດ ເທົ່າທີ່ພໍ່ຄົນນຶ່ງຈະເຮັດເພື່ອລູກໄດ້"

ເດັກນ້ອຍຜູ່ໄຮ້ດຽງສາ ຜູ່ທີ່ມີຮອຍຍິ້ມ ສຽງຫົວ ແວວຕາທີ່ສົດໃສ ຂາທັງສອງທີ່ພວມແອບຍ່າງຢຽບພື້ນແຜ່ນດິນຍັງບໍ່ເຖິງ 2 ປີ ກໍຕ້ອງມາປະເຊີນກັບຊະຕາກຳອັນແສນໂຫດຮ້າຍນີ້ ມັນບໍ່ຍຸຕິທຳເລີຍ! ຖ້າລາວຈະບໍ່ມີໂອກາດໄດ້ຍ່າງອອກໄປເຫັນຄວາມງົດງາມຂອງໂລກພາຍນອກ, ບໍ່ຍຸຕິທຳເລີຍ! ຖ້າລົມຫາຍໃຈນັບຈາກນີ້ ຈະຕ້ອງໃຊ້ຢູ່ພຽງເທິງຕຽງສີ່ຫຼ່ຽມນ້ອຍໆ ບໍ່ຍຸຕິທຳເລີຍ! ຖ້າດວງຕາຈະໄດ້ແນມເຫັນພຽງຫ້ອງນອນນ້ອຍນ້ອຍ ຝາເກົ່າໆ ພັດລົມ ດອກໄຟ ທີ່ບໍ່ມີຊີວິດໄຮ້ເຊື່ອຄວາມຮູ້ສຶກ ແລະມັນກໍຄົງບໍ່ຍຸຕິທຳເລີຍ! ຖ້າໂອກາດຂອງຄວາມເປັນຄົນຈະສິ້ນສຸດລົງພຽງເທົ່ານີ້ ເພາະມັນໂຫດຮ້າຍເກີນໄປທີ່ເດັກນ້ອຍຄົນນຶ່ງຈະໄດ້ຮັບ ແລະກໍຄົງມີພຽງປາຕິຫານ ມີພຽງແຕ່ປາຕິຫານເທົ່ານັ້ນທີ່ຈະຊ່ວຍໄດ້.





ແຕ່ໂຊກຊະຕາກໍໂຫດຮ້າຍເກີນໄປ ໄຮ້ຄວາມປານີຕໍ່ຊີວິດນ້ອຍໆ ເວລາ 26 ປີ ປາຕິຫານບໍ່ເຮັດໜ້າທີ່ຫຍັງເລີຍ ເປັນຫຍັງປ່ອຍໃຫ້ຊີວິດທີ່ຄວນຈະສົດໃສ ມີອະນາຄົດທີ່ຍາວໄກຕ້ອງມາຈົມຢູ່ກັບຄວາມທຸກເວທະນາເຖິງພຽງນີ້!

. . . . . . . . . . . . . . . .

ສຽງອ່ານທີ່ຟັງເກືອບບໍ່ເຂົ້າໃຈຈົບລົງ ແຕ່ທຸກຄົນກໍລຸກຂຶ້ນພ້ອມສຽງຕົບມືປະສານສຽງສະອື້ນ ແລະ ຢາດນ້ຳຕາ ສົ່ງໄປໃຫ້ກັບຊາຍໜຸ່ມຜູ່ທີ່ບໍ່ຍອມຈຳນົນຕໍ່ໂຊກຊະຕາ ຜູ່ທີ່ໃຊ້ຊີວິດຢູ່ເທິງລໍ້ລົດເຂັນມາເປັນເວລາກວ່າ 26 ປີນັ້ນດ້ວຍຄວາມປະທັບໃຈ.



# ຈຳເປັນ...



**ແດ່... ດອກໄມ້ທີ່ຖືກເດັດດົມ ແລ້ວໂຍນຖິ້ມໄປ..!!!** ຄຳວ່າ **"ຮັກ"** ເຮົາບໍ່ຮູ້ດອກວ່າມັນຈະເກີດຂຶ້ນເມື່ອໃດ ແລະ ຈະເກີດກັບໃຜແດ່ທີ່ຜ່ານເຂົ້າມາ ເມື່ອຄວາມຮັກຢູ່ເໜືອເຫດຜົນອື່ນໃດ ແລະ ຍິ່ງຄວາມສະເໜຫາຢູ່ເໜືອຄວາມຖືກຕ້ອງແລ້ວຈະດ້ວຍຄວາມຈຳເປັນ ຫລື ຄວາມຜິດພາດ ຄຳວ່າ **"ເມຍນ້ອຍ"** ກໍຄົງບໍ່ມີຍິງຄົນໃດປາດຖະໜາທີ່ຈະໃຊ້ຄຳນີ້ດອກ.

...............

"ຝົນ ບໍ່ສະບາຍບໍ ຫຼື ມີເລື່ອງຫຍັງບໍ່ສະບາຍໃຈ? ຄືເຫັນໂສກເສົ້າມາຫຼາຍມື້ແລ້ວ" ຂ້ອຍຖາມດ້ວຍຄວາມເປັນຫ່ວງ

"ຂ້ອຍຂໍໂທດ ທີ່ເສຍມາລະຍາດຖາມເລື່ອງສ່ວນຕົວເຈົ້າແຕ່ຖ້າລຳບາກໃຈທີ່ຈະເລົ່າກໍບໍ່ເປັນຫຍັງ"ຂ້ອຍເວົ້າພ້ອມທັງຕົບບ່າຝົນຄ່ອຍໆ ພ້ອມເວົ້າຕໍ່:

"ຂ້ອຍເອງກໍເກີດໃນຄອບຄົວທີ່ທຸກຍາກກ່ອນທີ່ຂ້ອຍ





ຈະມາຮອດມື້ນີ້ກໍໄດ້ຜ່ານຫຼາຍເລື່ອງລາວມາພໍສົມຄວນຂ້ອຍຕ້ອງໄດ້ເຮັດວຽກໄປນຳຮຽນໄປນຳ ໂດຍທີ່ຂ້ອຍໄປຮັບຈ້າງລ້າງຖ້ວຍລ້າງຈອກຢູ່ຮ້ານອາຫານເພື່ອຫາເງິນສົ່ງຕົນເອງຈົນຮຽນຈົບ. ທັງນີ້ກໍຍ້ອນພໍ່ແມ່ບໍ່ສົ່ງເສີມໃຫ້ຮຽນ ຕອນຢູ່ບ້ານເພິ່ນກໍມີແຕ່ຈົ່ມໃສ່ຫູຢູ່ທຸກມື້ ປຽບຂ້ອຍໃສ່ລູກສາວເຮືອນໃກ້ທີ່ເຂົາໄປເຮັດວຽກຢູ່ປະເທດເພື່ອນບ້ານ ແລ້ວກໍສົ່ງເງິນມາໃຫ້ຄອບຄົວເດືອນລະເປັນແສນເປັນລ້ານ ເພິ່ນເລີຍຢາກໃຫ້ຂ້ອຍໄປເຮັດວຽກຢູ່ພຸ້ນ ເພິ່ນວ່າກ່ອນຊິລ້ຽງລູກໃຫ້ໃຫຍ່ມາປານນີ້ແມ່ນໝົດເຂົ້າໄປຫຼາຍນາ ໝົດປາໄປຫຼາຍໜອງ ຕົນເອງເປັນລູກກໍຄວນຕອບແທນບຸນຄຸນ ດ້ວຍການໄປຫາເງິນສົ່ງມາໃຫ້ພໍ່ແມ່ໃຊ້ໄດ້ຢູ່ສຸກສະບາຍ"

"ແລ້ວພໍ່ແມ່ເຈົ້າເພິ່ນຮູ້ບໍ່ວ່າພວກທີ່ພາກັນໄປເຮັດວຽກຢູ່ພຸ້ນຫັ້ນເຂົາໄປເຮັດວຽກຫຍັງ?"ຝົນເງີຍໜ້າຂຶ້ນຖາມ.

"ຮູ້ ! ເພິ່ນຍັງບອກຂ້ອຍອີກວ່າ ຖ້າບໍ່ຢາກເຮັດວຽກໜັກຢູ່ໂຮງງານ ກໍໃຫ້ຫາເອົາຜົວລວຍໆຈະໄດ້ສະບາຍ"

"ໃນທຳນອງນີ້ ຂ້ອຍຄິດວ່າມັນເປັນການຄ້າມະນຸດໂດຍທາງອ້ອມເລີຍໃດ໋ນິ! ບໍ່ແມ່ນມະນຸດທຳມະດາ ມະນຸດທີ່ຂຶ້ນຊື່ວ່າລູກ, ຂ້ອຍເຫັນມາຫຼາຍລາຍແລ້ວທີ່ໄປເຮັດວຽກຢູ່ຝັ່ງນັ້ນ ໂດຍສະເພາະແມ່ຍິງເຮົາ ບາງຄົນກໍໄປຕິດລູກຕິດຜົວເຂົາຫຼົງໄຫລນຳແຕ່ວັດຖຸຈົນລືມສັກສີຕົນ, ຂໍພຽງໃຫ້ຕົນມີເງິນໃຊ້ມີຄຳໃສ່ມີລົດຂີ່ກໍພໍໃຈແລ້ວ. ບາງກໍລະນີທີ່ເຫັນເປັນຂ່າວເຈົ້າໜ້າທີ່ທາງຝັ່ງນັ້ນລົງກວດຮ້ານກິນດື່ມຍັງເຫັນມີສາວລາວອາຍຸ





ຍັງບໍ່ຮອດ 18 ປີຊໍ້ານ່າທີ່ໄປຂາຍບໍລິການທາງເພດຢູ່ຫັ້ນ ແລ້ວເປັນຫຍັງພໍ່ແມ່ຍັງມັກສົ່ງລູກຕົນໄປລົງໝໍ້ນາຮົກນັ້ນອີກ!"

"ກໍຍ້ອນເຫດນີ້ແລ້ວຂ້ອຍຈຶ່ງຈຳຕ້ອງໜີຈາກພໍ່ແມ່ມາເພື່ອສ້າງອະນາຄົດຂອງຕົນເອງ ເພື່ອພິສູດໃຫ້ເພິ່ນເຫັນວ່າບໍ່ຈຳເປັນຕ້ອງໄປເຮັດວຽກຢູ່ຝັ່ງນັ້ນກໍສາມາດລ້ຽງດູເພິ່ນໄດ້!"

"ຈະວ່າໄປແລ້ວຂ້ອຍກໍຖືວ່າໂຊກດີທີ່ພໍ່ແມ່ໃຫ້ໂອກາດຂ້ອຍໄດ້ຮ່ຳຮຽນ ແຕ່ຂ້ອຍເອງທີ່..." ຝົນເວົ້າສຽງຄ່ອຍລົງພ້ອມຫາຍໃຈບາດໃຫຍ່ໆ ກ່ອນຈະເວົ້າຕໍ່:

................

ແສງຕາເວັນຂອງເຊົ້າມື້ໃໝ່ສ່ອງປະກາຍຜ່ານປ່ອງຢ້ຽມມາກະທົບໃສ່ຕາຂ້ອຍຄ່ອຍໆມືນຂຶ້ນເຫັນເພດານສີຂາວຝາຫ້ອງສີຟ້າ ຜ້າກັ້ງລາຍດອກໄມ້ສີບົວອ່ອນ ແລະມີພຽງຜ້າຫົ່ມສີຂາວບາງໆປົກຄຶງໄວ້ຢູ່ ມັນເປັນສຳຜັດທີ່ບໍ່ຄຸ້ນເຄີຍ.

"ຕື່ນແລ້ວບໍ່?"

ຂ້ອຍຕົກໃຈຢ່າງແຮງ ທີ່ວາກໄປເຫັນຜູ້ຊາຍນອນຢູ່ຂ້າງໆເທິງຕຽງດຽວກັບຂ້ອຍ.

"ມັນເກີດຫຍັງຂຶ້ນ ຂ້ອຍມາຢູ່ນີ້ໄດ້ຈັ່ງໃດ? ແລ້ວນີ້ເຈົ້າບໍ່ຈິງ ມັນບໍ່ແມ່ນຄວາມຈິງ" ຂ້ອຍເວົ້າທັງນ້ຳຕາພ້ອມທັງແກວ່ງຫົວໄປມາຄືຄົນເສຍສະຕິ.

"ບໍ່ຕ້ອງສົງໄສຫຍັງດອກຈື່ນ້ຳສົ້ມມື້ຄືນນີ້ໄດ້ບໍ່! ນັ້ນແຫຼະຄືສາເຫດທີ່ພາເຈົ້າມາຢູ່ນີ້ກັບຂ້ອຍ" ຊາຍຄົນນັ້ນເວົ້າທັງຮອຍ

ຍິ້ມ ແຕ່ຂ້ອຍຟັງທັງນ້ຳຕາ

ຂ້ອຍຕົກສະເງີ້ປານຖືກກຳປັ້ນໂຍນເຂົ້າຊຸມຕາ ຄວາມໄວ້ໃຈທີ່ມີໃຫ້ໝູ່ ຕອບແທນກັນໄດ້ພຽງນີ້ບໍ່! ຖ້າຂ້ອຍມີຫຼັກຖານອື່ນເພີ່ມພໍທີ່ຈະເອົາຜິດຄົນພວກນີ້ໄດ້ຂ້ອຍຄົງໄປແຈ້ງເຈົ້າໜ້າທີ່ ເອົາພວກທີ່ມີສ່ວນກ່ຽວຂ້ອງມາຮັບໂທດ ແຕ່ກໍຄືວ່າແຫຼະແນວອຳນາດເງິນຢູ່ເໜືອຄວາມຖືກຕ້ອງຂ້ອຍຊິເຮັດຫຍັງໄດ້

ແລ້ວຫຼັງຈາກເຫດການມື້ນັ້ນມາ ຂ້ອຍກໍບໍ່ໄດ້ພໍ້ໃຈໝູ່ຄົນທີ່ເອົານ້ຳສົ້ມໃຫ້ຂ້ອຍກິນ ໃນງານວັນເກີດຂອງລາວນັ້ນອີກເລີຍ.

ແຕ່ວ່າຊາຍຄົນນັ້ນລາວບໍ່ຍອມເລີກລາ ຍັງທຽວມາຫາຂ້ອຍເຖິງບ່ອນເຮັດວຽກຢູ່ເລື້ອຍໆລາວບອກວ່າຂໍຮັບຜິດຊອບໃນສິ່ງທີ່ໄດ້ກະທຳລົງໄປ ທີ່ລາວເຮັດໄປທັງໝົດກໍເພາະລາວຮັກຂ້ອຍ ຂໍໃຫ້ຂ້ອຍອະໄພ ແລະໃຫ້ໂອກາດລາວຈັກຄັ້ງ ເພື່ອພິສູດຄວາມຈິງໃຈ

ທຳອິດຂ້ອຍກໍບໍ່ເຊື່ອ ຄິດວ່າລາວຄົງຫວັງມາຕົວະຂ້ອຍຫຼິ້ນຊື່ໆ ເພາະຜູ່ຊາຍທີ່ອາຍຸສ່ຳນີ້ ໜ້າທີ່ການການໝັ້ນຄົງປານນີ້ ຄົງຈະມີຄອບຄົວຢູ່ແລ້ວ

ແຕ່ເມື່ອເວລາຜ່ານໄປລາວກໍຍັງບໍ່ລົ້ມເລີກຄວາມພະຍາຍາມທີ່ຈະຄົບກັບຂ້ອຍ,ລາວເປັນຫ່ວງຄອຍຖາມສາລະທຸກສຸກດິບຢູ່ບໍ່ຂາດ ທຽວມາຫາບໍ່ເວັ້ນວັນ ຈົນໃນທີ່ສຸດຂ້ອຍກໍໃຈອ່ອນຍອມໃຫ້ລາວໄປມາຫາສູ່ ເຖິງວ່າລາວຊິອາຍຸຫຼັກສີ່ ແຕ່ລາວຍັງເບິ່ງຄືໜຸ່ມແລະເຈົ້າຊູ້ສົມຄວນໃນໄລຍະທີ່ພົວພັນກັນ





ຢູ່ນັ້ນ ລາວໃຊ້ເງິນອຳນວຍຄວາມສະດວກທາງກາຍໃຫ້ຂ້ອຍທຸກຢ່າງ ບໍ່ວ່າຈະເປັນລົດຂີ່ ເງິນຄຳ ຫຼື ສິ່ງອື່ນທີ່ຂ້ອຍຕ້ອງການລາວກໍຫາໃຫ້ລາວເອົາໃຈຂ້ອຍທຸກຢ່າງ ແມ່ນແຕ່ເຫັນແບ້ຍ່າງມາຂ້ອຍວ່າຊ້າງລາວກໍ "ອືມ"! ນຳພຸ້ນແຫຼະ.

ເມື່ອດົນໄປກໍເລີ່ມຮູ້ສຶກວ່າຂ້ອຍຮັກລາວແທ້ໆແລ້ວ ເມື່ອຄວາມສຳພັນຖືກພັດທະນາຂຶ້ນ ລາວກໍເຊົ່າຫ້ອງແຖວໃຫ້ຂ້ອຍຢູ່ຄົນດຽວ ແລ້ວທຽວມາຫາຢູ່ເລື້ອຍໆ, ແຕ່ຂ້ອຍກໍແປກໃຈບ່ອນວ່າ ເວລາມາຫາຂ້ອຍໂທລະສັບລາວປິດສຽງໄວ້ຫຼືເວລາລົມກໍອອກໄປລົມຢູ່ໄກໆ, ບໍ່ຖ່າຍຮູບຄູ່ກັນໂດຍອ້າງວ່າບໍ່ມັກຖ່າຍຮູບ,ເວລາໄປຫຼິ້ນກໍຈະພາໄປບ່ອນລີ້ໆລັບໆຫຼືບໍ່ກໍພາໄປໄກຈາກຕົວເມືອງ, ລາວບໍ່ເຄີຍລົມເລື່ອງສ້າງຄອບຄົວກັບຂ້ອຍເລີຍ ຂ້ອຍຊວນເມືອຢາມພໍ່ແມ່ລາວກໍປະຕິເສດຕະຫຼອດທັງທີ່ກໍຄົບກັນເປັນປີສອງປີແລ້ວ

ແຕ່ທຸກຄັ້ງທີ່ຂ້ອຍຖາມ ຫຼືສະແດງພຶດຕິກຳບໍ່ເຊື່ອໃຈຫຼືຢາກອອກຫ່າງລາວກໍຈະມີວິທີອອຍໃຈໃຫ້ຢູ່ທຸກຄັ້ງເຊັ່ນວ່າຊື້ມືຖືເຄື່ອງໃໝ່ກະເປົາແພງໆຫຼືອາດເປັນເຄື່ອງປະດັບໃຫ້ທັງບວກໃສ່ກັບຄາລົມຫວານໆ ສີໜ້າ ແວວຕາ ນ້ຳສຽງທີ່ຊົງເປັນຕາອີດູຕົນແດ່ ຂ້ອຍກໍໃຈອ່ອນໃຫ້ລາວທຸກຄັ້ງ

ແຕ່ກໍຄືວ່າຫັ້ນແຫຼະເນາະຄວາມລັບມັນບໍ່ມີໃນໂລກປ່ອງຢ້ຽມມີຫູປະຕູມີປ່ອງ ແລະໃນທີ່ສຸດປ່ອງນັ້ນກໍໄດ້ເປີດອອກໃນມື້ກິນລ້ຽງກ່ອນບຸນປີໃໝ່ລາວຢູ່ບໍລິສັດຂ້ອຍກໍໄປຮ່ວມປົກກະຕິ ແຕ່ກໍມີສິ່ງບໍ່ປົກກະຕິເກີດຂຶ້ນເມື່ອຍິງສອງຄົນເຂົ້າໄປ





ຖາມຫາຂ້ອຍຢູ່ກາງງານ ຂ້ອຍເກືອບເປັນວິນລົງກັບໜ້ອງ ເມື່ອຮູ້ວ່າຍິງຄົນນຶ່ງນັ້ນເປັນເມຍຂອງອ້າຍພັນຄົນທີ່ຂ້ອຍເອີ້ນວ່າຄົນຮັກ ແລະກໍຄືຄົນດຽວທີ່ຂ້ອຍຈະພາໄປໃຫ້ພໍ່ແມ່ຮູ້ຈັກໃນນາມວ່າທີ່ລູກເຂີຍ.

ພວກເຂົາເຂົ້າມາຊີ້ໜ້າດ່າອາລະວາດໃສ່ຂ້ອຍ ແລະເຂົາຍັງຖ່າຍວີດີໂອຂ້ອຍລົງປະຈານໃນໂຊຊຽວ(Social)ຫຼືທີ່ເຂົາເອີ້ນວ່າໂລກອອນໄລນ໌ ແລ້ວປະຊາຊົນກໍຫຸ່ມກ່າວປະນາມຕໍ່ວ່າທັງສາບແຊ່ງສາລະພັດ ຈົນຂ້ອຍຈຳຕ້ອງໄດ້ລາອອກຈາກບ່ອນເຮັດວຽກຍ້ອນທົນຟັງຄຳກ່າວຂວັນບໍ່ໄຫວ ຍອມຮັບວ່າຊ່ວງເວລານັ້ນຂ້ອຍເຄີຍຄິດທີ່ຈະທຳຮ້າຍຕົນເອງແລ້ວເທື່ອນຶ່ງ ເພື່ອໜີຄວາມເຈັບປວດແສນອັບອາຍນີ້ ແຕ່ໃນຂະນະທີ່ຂ້ອຍກຳລັງຈະຈົບຊີວິດຕົນລົງນັ້ນ ສຽງໂທລະສັບກໍດັງຂຶ້ນ ແນມໄປເຫັນຮູບພໍ່ແມ່ຢູ່ເທິງໜ້າຈໍ ຂ້ອຍກົດຮັບສາຍເພື່ອຫວັງຈະໄດ້ຍິນສຽງເປັນເທື່ອສຸດທ້າຍ ແຕ່ຄຳທຳອິດທີ່ໄດ້ຍິນ...

"ລູກສະບາຍດີບໍ່? ໄປຢູ່ໄກບ້ານໄກເມືອງຄົນດຽວຮັກສາໂຕດີໆເດີ ພໍ່ກັບແມ່ຄິດຮອດແລະເປັນຫ່ວງຫຼາຍ"

ຄຳເວົ້ານັ້ນເຮັດໃຫ້ໂຕຂ້ອຍອ່ອນຍຸບລົງທັນທີ ຢາທີ່ຢູ່ເຕັມອຸ້ງມືນັ້ນຕົກຊະລົງກັບພື້ນ.

"ນີ້ກູກຳລັງຊິເຮັດຫຍັງລົງໄປກູກຳລັງຈະທຳລາຍແກ້ວຕາດວງໃຈຂອງພໍ່ແມ່ພຽງເພາະຜູ່ຊາຍຄົນດຽວເທົ່ານີ້ຫວາ?" ຂ້ອຍດ່າຕົວເອງພ້ອມກັບນ້ຳຕາຂອງຄວາມສຳນຶກຜິດກໍໄຫຼອອກມາບໍ່ເຊົາ.





ຫຼັງຈາກເຫດການໃນຄືນນັ້ນ ຂ້ອຍກໍຕັດສິນໃຈກັບໄປຢູ່ບ້ານນຳພໍ່ແມ່ໄລຍະນຶ່ງແລ້ວເລົ່າເລື່ອງລາວທີ່ເກີດຂຶ້ນໃຫ້ເພິ່ນຟັງ, ຂ້ອຍຄິດວ່າເພິ່ນຕ້ອງຊັງ ຫຼື ບໍ່ເພິ່ນກໍຕ້ອງຜິດຫວັງໃນໂຕຂ້ອຍຫຼາຍ ແຕ່ບໍ່ເລີຍເພິ່ນທັງສອງຄອຍເຊັດນ້ຳຕາທີ່ກຳລັງໄຫຼໃຫ້ຂ້ອຍຕ່າງຫາກ, ຄວາມຮັກອັນບໍລິສຸດຂອງເພິ່ນທັງສອງຊ່ອຍປົວແຜໃຈໃຫ້ຂ້ອຍຈົນເຊົາ ເຖິງແມ່ນມັນຈະຍັງມີຮອຍແປ້ວໃຫ້ເຕືອນສະຕິຢູ່ກໍຕາມ.

. . . . . . . . . . . . . . . .

ເມື່ອໄດ້ຟັງເລື່ອງລາວທີ່ຝົນເລົ່າແລ້ວນ້ຳຕາຂ້ອຍກໍໄຫຼຍ່າວລົງ ເວົ້າບໍ່ອອກພໍຄວາມ ສຳຜັດໄດ້ແຕ່ຄວາມເຈັບປວດທີ່ຜູ່ຍິງຄົນນຶ່ງໄດ້ຮັບເທົ່ານັ້ນ.

"ສົງໄສວ່າມື້ຄືນນີ້ຂ້ອຍຈະເມົາຢາແກ້ໄຂ້ຈຶ່ງຫລັບແຕ່ເວັນ ກໍເລີຍຝັນຫລາຍ ຝັນໄປເລື້ອຍ, ດີແຕ່ມັນເປັນພຽງຄວາມຝັນ ຖ້າມັນເກີດຂຶ້ນແທ້ຈັກຂ້ອຍຊິເປັນຈັ່ງໃດ"

"ຮື !! ວ່າຈັ່ງໃດເກາະ ຄວາມຝັນ... ທີ່ເຈົ້າເລົ່າມາທັງໝົດທັງມວນນີ້ ເປັນພຽງຄວາມຝັນຊັ້ນຫວະ, ໂອ່ຍ..!! ຄົນອີຫຍັງຊ່າງຝັນໄດ້ເປັນເລື່ອງເປັນລາວຄັກແນ່" ຂ້ອຍເວົ້າພ້ອມແນມເບິ່ງໜ້າລາວແລ້ວກໍຫົວໂຮຂຶ້ນ.

# ລາຍງານດອກໄມ້





"ຊ່ວຍເຫຼືອແດ່ທ້ອນທ່ານເອີ່ຍ! ຂໍທຶນມາຊ່ວຍສ້າງໂຮງຮຽນຫໍສະໝຸດໃຫ້ແດ່ໂຮງຮຽນຫຼັງເກົ່າກໍເພພັງແລ້ວຫຼັງຄາກະຮົ່ວໝົດລະ ຈັ່ງໃດກໍຝາກຄວາມຫວັງໄວ້ກັບທ່ານນີ້ແຫຼະທີ່ຈະພໍຊ່ວຍໄດ້"

"ກະເຂົ້າໃຈຢູ່ແລ້ວຊິລອງສະເໜີໄປທາງອົງການເບິ່ງກ່ອນເດີ້ ຍັງບໍ່ຮັບປາກເທື່ອວ່າຊິໄດ້ເຕັມຮ້ອຍຫຼືບໍ່ ຕ້ອງໃຫ້ທາງຂັ້ນເທິງເພິ່ນລົງມາກວດກາເບິ່ງ ເພາະທຸກມື້ນີ້ມີຫຼາຍບ້ານຫຼາຍໂຮງຮຽນທີ່ຕ້ອງການຄວາມຊ່ວຍເຫຼືອຢູ່ຄືກັນ."

"ຂອບໃຈທ່ານຫຼາຍໆ! ຈັ່ງໃດກໍຝາກແດ່ເດີ້!"

"ເອື້ອຍແກ້ວ ເຮົາຈະເຮັດຈັ່ງໃດຊິຂໍທຶນໃຫ້ບ້ານນີ້ໄດ້ເບິ່ງພວກເພິ່ນຝາກຄວາມຫວັງໄວ້ກັບພວກເຮົາຫຼາຍໃດ່."

"ກະລອງຂໍໄປເບິ່ງແຫຼະ ກະກຽມເອກະສານປະກອບຂໍ້ມູນລາຍລະອຽດແລ້ວກໍຍື່ນຂໍເພິ່ນໄປເບິ່ງ ບໍ່ໄດ້ຫຼາຍກໍຄົງໄດ້





ໜ້ອຍແຫຼະເອື້ອຍວ່າ." ແກ້ວສາວໄວສາມສິບກວ່າບອກຕໍ່ຮຸ່ນນ້ອງທີ່ເຮັດວຽກນຳກັນ.

ຫຼັງຈາກໃບສະເໜີຂໍທຶນສ້າງຫໍສະໝຸດ ແລະສ້ອມແປງໂຮງຮຽນຖືກຍື່ນຂຶ້ນໄປເຖິງຂັ້ນເທິງ ຜ່ານໄປສາມເດືອນ ຄຳຕອບທີ່ລໍຄອຍກໍອອກມາ ເວລາຜ່ານໄປບໍ່ພໍເທົ່າໃດເດືອນຈາກໂຮງຮຽນຫຼັງເກົ່າຊຸດໂຊມ ກໍຖືກປຸ່ງປ່ຽນເປັນໂຮງຮຽນໃໝ່ຫຼັງງາມອາດຕາ ພ້ອມຫໍສະໝຸດຫຼັງໃໝ່ທີ່ບັນຈຸປຶ້ມແບບຮຽນ ນິທານໄວ້ຢ່າງຫຼວງຫຼາຍ

"ຂອບໃຈຫຼາຍໆເດີ ທີ່ລຳບາກຫາທຶນຫາຮອນມາຊ່ວຍເຫຼືອບ້ານເຮົາໃຫ້ໄດ້ໂຮງຮຽນຫຼັງໃໝ່"

"ມັນຄືໜ້າທີ່ຂອງພວກລູກຢູ່ແລ້ວ ແລ້ວຕໍ່ໄປກໍຄົງຝາກເປັນໜ້າທີ່ຂອງພໍ່ແມ່ປະຊາຊົນທຸກຄົນທີ່ຕ້ອງເບິ່ງແຍງຮັກສາມັນຊ່ວຍກັນ, ແລ້ວທາງເຮົາຕ້ອງໄດ້ບັນທຶກຊື່ບ້ານໂຮງຮຽນເຂົ້າເປັນກຸ່ມບ້ານທີ່ໄດ້ຮັບການຊ່ວຍເຫຼືອຈາກອົງການພວກເຮົາ ແລ້ວທຸກເດືອນ ຫຼືວ່າເດືອນໃດທີ່ມີການປະຊຸມກ່ຽວກັບໂຮງຮຽນພວກເຮົາກໍຈະເຊີນອາຈານຢູ່ນີ້ເຂົ້າຮ່ວມນຳ ແລະບາງທີທາງຫົວໜ້າໃຫຍ່ເພິ່ນກໍຈະລົງມາຢ້ຽມຢາມແດ່."

"ໄດ້ໆ ບໍ່ມີບັນຫາ ພວກເຮົາພ້ອມເຮັດຕາມຄຳແນະນຳທຸກຢ່າງ ໃຫ້ສົມທີ່ທາງອົງການໃຫ້ຄວາມຊ່ວຍເຫຼືອ" ເມື່ອການໂອ້ລົມໃນພິທີການເປີດໂຮງຮຽນໃໝ່ສຳເລັດລົງດ້ວຍດີ ແກ້ວກັບເພື່ອນຮ່ວມງານກໍໄດ້ຂໍລາກັບທັນທີ.

ຫຼັງຈາກໄດ້ໂຮງຮຽນຫຼັງໃໝ່ມາ ທາງຄູອາຈານນັກຮຽນ





ຮວມທັງພໍ່ແມ່ປະຊາຊົນຕ່າງກໍດີອົກດີໃຈກັນທົ່ວໜ້າ ແລະເບິ່ງຄືວ່າການຮຽນການສອນຂອງຄູກັບນັກຮຽນກໍມີທ່າທີດີຂຶ້ນ ເມື່ອຟັງຈາກລາຍງານຂອງຄູອາຈານທີ່ເຂົ້າຮ່ວມປະຊຸມນຳໃນທຸກເທື່ອ.

"ນັບແຕ່ໄດ້ໂຮງຮຽນຫຼັງໃໝ່ ໄດ້ຫໍສະໝຸດຫຼັງໃໝ່ມານີ້ທັງນັກຮຽນພ້ອມຄູອາຈານເຮົາຕ່າງກໍຫັນຫ້າວໃນການຮຽນການສອນກັນຫຼາຍຂຶ້ນ ໂດຍມີຜົນຄະແນນຈາກລາຍເດືອນເປັນຕົວຊີ້ວັດ ແລະການຊົມໃຊ້ຫໍສະໝຸດ ເພາະນັກຮຽນເວລາວ່າງຍາມພັກຕ່າງກໍພາກັນຫຼັ່ງເຂົ້າຫໍສະໝຸດຫາອ່ານນິທານແຕ້ມຮູບກັນຢ່າງມ່ວນຊື່ນ ແລ້ວມື້ພັກໂດຍສະເພາະວັນສິນ ກໍຈະມີໄທບ້ານມາຊ່ວຍອອກແຮງງານສາມັກຄີອະນາໄມໂຮງຮຽນນຳກັນ ປູກຕົ້ນໄມ້ໃຫຍ່ໃຫ້ເປັນຮົ່ມພ້ອມທັງດອກໄມ້ປະດັບຢ່າງຈົບງາມ..."

"ຖືວ່າເປັນການປຸ່ງແປງທີ່ດີຫຼາຍ ພວກເຮົາຂໍໃຫ້ພວກທ່ານສືບຕໍ່ກັນປະຕິບັດແບບນີ້ຕະຫຼອດໄປ ເພື່ອຄວາມຈະເລີນກ້າວໜ້າຂອງລູກຫຼານເຮົາໃນອະນາຄົດ. ແລ້ວອີກເລື່ອງນຶ່ງປະມານອາທິດໜ້າ ທາງຫົວໜ້າເພິ່ນຊິລົງມາຢ້ຽມຢາມໃນແຕ່ລະໂຮງຮຽນທີ່ໄດ້ຮັບຄວາມຊ່ວຍເຫຼືອຈາກທາງເຮົາ ແລ້ວບໍ່ຕ້ອງກະກຽມອາຫານຫຍັງໃຫ້ຫຍຸ້ງຍາກ ແຕ່ຖ້າໂຮງຮຽນໃດຫາກມີສິລະປະຍາກສະແດງໃຫ້ເພິ່ນເບິ່ງກໍກະກຽມໄວ້ໄດ້." ແກ້ວບອກຕໍ່ຄູອາຈານກ່ອນທີ່ກອງປະຊຸມຈະຈົບລົງ ເພື່ອຈະໄດ້ກຽມຕົວໃນການລົງຢ້ຽມຢາມຂອງຫົວໜ້າ.

ອາກາດຮ້ອນໃນຍາມໃກ້ຈະທ່ຽງ ແສງຕາເວັນແຜ່ກະຈາຍຄວາມຮ້ອນອອກສູ່ຜືນແຜ່ນດິນ ກາງຖະໜົນລຽບສອງຂ້າງທາງມີນ້ອງນ້ອຍນັກຮຽນຢືນລຽນແຖວພ້ອມກັນຖືທຸງໃບກຢູ່ປານໂຕທຸ່ນ ໜ້າຕາປຽກຊຸ່ມໄປດ້ວຍເຫື່ອໄຄ ແລ້ວບໍ່ດົນລົດຕູ້ສີຂາວກໍໄດ້ເຄື່ອນຍ້າຍເຂົ້າມາໃກ້ໆ ແລ້ວກໍລ້ຽວເຂົ້າປະຕູທີ່ມີປ້າຍຊື່ຂຽນບອກຢ່າງຊັດເຈນວ່າ ໂຮງຮຽນປະຖົມສົມບູນ... ບັນດາຄູອາຈານພ້ອມກັນຢືນລຽນແຖວ ຕາມລະບຽງໜ້າຫ້ອງການດ້ວຍໃບໜ້າທີ່ຍິ້ມແຍ້ມແຈ່ມໃສ.

"ສະບາຍດີ ສະບາຍດີ!"

"ສະບາຍດີ ສະບາຍດີ! ພວກເຮົາມີຄວາມຍິນດີເປັນຢ່າງຍິ່ງທີ່ພວກທ່ານສະຫຼະເວລາມາຢ້ຽມຢາມທາງໂຮງຮຽນ." ເວົ້າແລ້ວຫົວໜ້າໂຮງຮຽນພ້ອມຄູອາຈານກໍໄດ້ພາແຂກຍ່າງເລາະເບິ່ງທາງດ້ານໜ້າຫ້ອງຮຽນໜ້ອຍນຶ່ງແລ້ວກໍເຊີນແຂກເຂົ້າໄປນັ່ງພັກກິນນ້ຳກິນທ່າໂອ້ລົມກັນຢູ່ພາຍໃນຫ້ອງການ ພໍນັ່ງໄດ້ບຶດນຶ່ງແກ້ວກໍຂໍອອກໄປຖ່າຍຮູບມຸມຕ່າງໆ ຂອງໂຮງຮຽນ ເພື່ອຈະໄດ້ເອົາໄປຕິດກະດານຂ່າວ.

"ນ້ອງ ນ້ອງ! ມື້ນີ້ພວກເຈົ້າບໍ່ໄດ້ຮຽນໜັງສືບໍ່?" ແກ້ວຖາມນັກຮຽນທີ່ຢືນຢູ່ກັນເປັນຈຸໆ.

"ບໍ່! ນາຍຄູວ່າມື້ນີ້ມີແຂກມາເລີຍພັກໃຫ້ແຕ່ວານເພື່ອເຮັດອະນາໄມໂຮງຮຽນ."

"ອືມ...! ແລ້ວນິທານໃນຫໍສະໝຸດເດ່ມ່ວນບໍ່! ພວກນ້ອງມັກນິທານເລື່ອງໃດທີ່ສຸດ?" ແກ້ວຖາມຕໍ່





"ບໍ່ຮູ້ເລີຍ ເພາະແຕ່ເປີດໂຮງຮຽນມາ ຫາກໍໄດ້ເຂົ້າອ່ານເທື່ອດຽວ ແລ້ວນາຍຄູເພິ່ນກະປິດໄວ້ເລີຍ ຫາກໍມາເປີດອີກມື້ນີ້ແຫຼະ..." ແກ້ວຊືງຢູ່ຊົ່ວຂະນະ ເມື່ອໄດ້ຍິນຄຳຕອບຂອງນັກຮຽນ ແກ້ວແນມໄປຍັງຫ້ອງສະໝຸດ ພ້ອມຂາທັງສອງຄ່ອຍໆກ້າວໄປ

ເວລາແນມເບິ່ງດ້ວຍສາຍຕາຜ່ານປ່ອງຢ້ຽມທາງນອກສະພາບລວມຂອງຫໍສະໝຸດ ກໍເບິ່ງຈົບງາມປຶ້ມກໍວາງເປັນລະບຽບດີ ແຕ່ພໍໄດ້ເຂົ້າໄປເບິ່ງໃກ້ໆຈຶ່ງຮູ້ວ່າ ປົກໜັງສືທັງເກົ່າໜາງສີຈືດຊືດ ແລະເຕັມດ້ວຍຂີ້ຝຸ່ນ ທັງສໍສີ ສຳລັບແຕ້ມຮູບກໍວາງໄວ້ຢ່າງເປັນລະບຽບ ໂດຍບໍ່ມີສີກ້ານໃດກຸດຫ້ຽນຍ້ອນວ່າຖືກນຳໃຊ້ເລີຍ ໂຮງແຫຼມສໍກໍເຂົ້າໝ້ຽງຍ້ອນຂີ້ຝຸ່ນຈັບ

ທັນໃດນັ້ນແກ້ວກໍເຫຼືອດໄປເຫັນຕູ້ໜ່ວຍນຶ່ງ ທີ່ບັນຈຸປຶ້ມໄວ້ຈົນອັດແໜ້ນຢ່າງຈົບງາມ ດ້ວຍຄວາມສົງໄສຈຶ່ງໄດ້ໄຂອອກເບິ່ງ ແຕ່ສິ່ງທີ່ຢູ່ທາງໃນ ເຮັດໃຫ້ຫົວໃຈຕ້ອງອ່ອນຕຸບລົງກັບໝ້ອງ ເພາະປຶ້ມທີ່ເຫັນວ່າຈົບງາມທາງດ້ານໜ້ານັ້ນ ທາງໃນເຕັມແຕ່ຂີ້ຝຸ່ນ ບາງຫົວຖືກປວດແຫ້ນ ໜູກັດຂາດໄປແດ່ກະມີ ແລະລຽບຕາມຝາຫ້ອງດ້ານຫຼັງຕູ້ ກໍຍັງເຫັນມີຄອງສີເຫຼືອງເປັນແຖວຍາວ ແກ້ວແຫງນໜ້າຂຶ້ນເບິ່ງ ປາກົດວ່າຫຼັງຄາຮົ່ວເປັນປ່ອງນ້ອຍໃຫຍ່ຫຼາຍຮູ.

ແກ້ວຍ່າງອອກມາຈາກຫໍສະໝຸດດ້ວຍສີໜ້າທີ່ຜິດຫວັງ ແລ້ວຍ່າງກົງໄປທາງຫ້ອງນ້ຳ ແຕ່ພໍຈະຍ່າງຂາເຂົ້າໄປກໍຕ້ອງຟ້າວຖົກຂາຄືນທັນທີ ເມື່ອເຫັນສະພາບຫ້ອງນ້ຳບໍ່ຕ່າງ





ຫຍັງກັບວ່າຖືກສ້າງມາຫຼາຍຟ້າຫຼ້າຫຼາຍປີແລ້ວ ກ໊ອກນ້ຳທາງໃນແຕກຫັກໃຊ້ຖົງຢາງຄວຽນໄວ້ພໍບໍ່ໃຫ້ນ້ຳໄຫຼອອກຫຼາຍ ຝາຫ້ອງນ້ຳກໍເຕັມແຕ່ນັກປັດຊະຍາທີ່ໄປລົງລາຍເຊັນໄວ້ ທາງພື້ນກໍເບິ່ງເກືອບບໍ່ເຫັນຮອດລາຍກະໂລ້.

ແກ້ວຍ່າງອອກມາພ້ອມຖອນຫາຍໃຈບາດໃຫຍ່ໆຍ່າງເລາະເບິ່ງໂດຍຮອບ ເຫັນຂີ້ເຫຍື້ອກອງບັກໃຫຍ່ຖືກຖິ້ມຮວມກັນຢູ່ທາງດ້ານຫຼັງ ບໍ່ຈັກເຈ້ຍ ຖົງຢາງ ກະໂປ໋ະກະປ໋ອງເສດໄມ້ຕ່າງໆ ປົນຊະກັນຢູ່ ແກ້ວແກວ່ງຫົວແລ້ວຍ່າງເຂົ້າໄປໃນຫ້ອງການ ພ້ອມຈົ່ມກັບຕົນເອງຄ່ອຍໆ...

**ລາຍງານດອກໄມ້ແທ້ໆ!**





ເປັນຫຍັງ? ເປັນຫຍັງ?
ຄົນມີຢູ່ເປັນລ້ານໆ ແຕ່ຂ້ອຍຄືຮັກໃຜບໍ່ໄດ້
ເປັນຫຍັງຕ້ອງຄຶດຮອດແຕ່ເຈົ້າ ຄົນທີ່ຈາກຂ້ອຍໄປ...

• • • • • • • • • • • • • • • • •

ບັນຍາກາດຍາມຄ່ຳຄືນຂອງທ້າຍເດືອນທັນວາຢູ່ກາງສວນແຄມໜອງປາ ອ້ອມຮອບດ້ວຍຕົ້ນໄມ້ໃຫຍ່ນ້ອຍ ສາຍລົມກໍໂຊຍພັດເອົາຄວາມໜາວເຢັນມາເປັນຮູດໆ ທ້ອງຟ້າທີ່ມືດດຳໄຮ້ແສງເດືອນຍິ່ງເຮັດໃຫ້ເຫັນໝູ່ດວງດາວທີ່ຢັ້ງຢາຍຢູ່ເດຍລະດາຍໄດ້ຊັດເຈນ

"ອ້າຍດາວຕົກອະທິຖານໄວ" ຂ້ອຍເວົ້າພ້ອມຍໍມືຂຶ້ນນົບເພື່ອຂໍພອນ

"ອະທິຖານຫຍັງ?"ເຈົ້າຖາມພ້ອມສຽງຫົວຄ່ອຍໆ





"ຫົວຂວັນໆ! ເຈົ້າຄືບໍ່ອະທິຖານ ເຂົາວ່າອະທິຖານຕອນເຫັນດາວຕົກມັກຈະສົມຫວັງເດະ" ຂ້ອຍເວົ້າດ້ວຍສີໜ້າຈິງຈັງ

"ແລ້ວອະທິຖານວ່າຈັ່ງໃດ!" ເຈົ້າຖາມຊ້ຳຄຳຖາມເກົ່າ

"ບໍ່ບອກ ຫົວຂວັນກັນລະ!"

"ບໍ່ບອກກໍຮູ້ ເຈົ້າອະທິຖານຂໍໃຫ້ໄດ້ມານັ່ງເບິ່ງດາວກັບຂ້ອຍແບບນີ້ທຸກປີແມ່ນບໍ່?" ເຈົ້າເວົ້າພ້ອມຈັບຄາງຂ້ອຍປິ່ນມາຄ່ອຍໆແລ້ວຈ້ຶງເບິ່ງຕາ

"ຢ່າມາເປັນຮູ້ດີເທາະ!" ຂ້ອຍເວົ້າພ້ອມລົບສາຍຕາ

"ແມ່ນແທ້ຫັ້ນລະ ແມ່ນບໍ່! ບໍ່ຊັ້ນເຈົ້າບໍ່ລົບສາຍຕາຂ້ອຍດອກ" ແລ້ວເຈົ້າກໍຈັບມືທັງສອງຂອງຂ້ອຍຂຶ້ນມາໂອບໄວ້ ແລ້ວເວົ້າຕໍ່

"ຂ້ອຍສັນຍາຊິເຮັດໃຫ້ຄຳອະທິຖານຂອງເຈົ້າເປັນຈິງທຸກປີ" ຄຳເວົ້າຂອງເຈົ້າເຮັດໃຫ້ຂ້ອຍເວົ້າຫຍັງບໍ່ອອກໄດ້ແຕ່ຍິ້ມ

"ອາຍຊັ້ນເບາະ! ຮຶ... ເດັກນ້ອຍເອີ່ຍ!" ເຈົ້າເວົ້າແລ້ວຍິ້ມພ້ອມເອົາມືຍ່ອງຫົວຂ້ອຍຄ່ອຍໆ...

"ໂອ່ຍໆ! ໂລກນີ້ຄືຊິມີແຕ່ເພິ່ນສອງຄົນລະນໍ ໃຈຄໍຊິບໍ່ມານັ່ງກັບໝູ່ກັບຄູ່ເລີຍຫວາ"ສຽງໝູ່ທີ່ນັ່ງອ້ອມກອງໄຟຮ້ອງມາໃສ່

***"ຂ້ອຍຮັກເຈົ້າຮັກເຈົ້າເທົ່ານັ້ນທຸກລົມຫາຍໃຈຊີວິດມີເຈົ້າຂ້າງກາຍ ບໍ່ຫວັ່ນໄຫວຕໍ່ສິ່ງໃດທີ່ເຂົ້າມາ..."*** ເຈົ້າດີດກີຕ້າພ້ອມຮ້ອງເພັງນີ້ແລ້ວຈ້ຶງສາຍຕາມາເບິ່ງຂ້ອຍ

"ໂອ່ຍໆໆ! ມົດກັດໆ ຫວານກັນກະດໍ້" ໝູ່ພ້ອມກັນເຢີ້ຍດ້ວຍຄວາມມ່ວນຊື່ນເຮັດໃຫ້ບັນຍາກາດງານ Countdown





(ນັບຖອຍຫຼັງສົ່ງທ້າຍປີເກົ່າຕ້ອນຮັບປີໃໝ່) ຟົດຟື້ນຂຶ້ນທັນທີ

ແລະທຸກຄັ້ງທີ່ເຮົາເຈີກັນ ເຈົ້າເຮັດໃຫ້ຂ້ອຍຕົກຂຸມຮັກເຈົ້າໄດ້ທຸກຄັ້ງ ສຽງເວົ້າ ຮອຍຍິ້ມ ແວວຕາຂອງເຈົ້າອົບອຸ່ນແລະປອດໄພທີ່ສຸດສຳລັບຂ້ອຍ

ຂ້ອຍບໍ່ຮູ້ດອກວ່າແຟນທີ່ດີທີ່ສຸດເປັນແບບໃດ ເພາະເຈົ້າເປັນແຟນທີ່ບໍ່ເຄີຍຮູ້ໃຈຂ້ອຍເລີຍຈັກເລື່ອງ ແຕ່ເຈົ້າຮູ້ທຸກເລື່ອງທີ່ເກີດຂຶ້ນກັບຂ້ອຍ ເຈົ້າບໍ່ເຄີຍເຂົ້າໃຈໃນສິ່ງທີ່ຂ້ອຍເປັນແຕ່ເຈົ້າຮັບທຸກຢ່າງທີ່ເປັນຂ້ອຍ ເຖິງເຈົ້າຈະບໍ່ໄດ້ສ້າງຮອຍຍິ້ມໃຫ້ຂ້ອຍຕະຫຼອດເວລາ ແຕ່ທຸກຄັ້ງທີ່ຂ້ອຍມີນ້ຳຕາເຈົ້າຈະມາຢູ່ຂ້າງສະເໝີໆ ຈົນວັນເວລາລ່ວງເລີຍຈາກວັນຜັນເປັນປີເປັນຫຼາຍປີທີ່ເຮົາຮັກກັນ ຈົນທ້າຍທີ່ສຸດເຮົາກໍໄດ້ຕັດສິນໃຈໃຊ້ຊີວິດຄູ່ຢູ່ຮ່ວມກັນ ເຈົ້າຍັງຄືສະເໝີຕົ້ນສະເໝີປາຍທຸກຢ່າງ ຮັກແບບໃດກໍຍັງຮັກແບບນັ້ນ ດູແລແບບໃດກໍຍັງຄືດູແລແບບນັ້ນ

"ກິນເຂົ້າແດ່ຈັກໜ້ອຍນໍ້ ຂ້ອຍເຮັດເອງກັບມື ເອົາສູດມາຈາກ youtube ພຸ້ນເດະ"

"ຂອບໃຈ! ສົມລາຄາຄຸຍບໍ່ນໍ"

"ລອງເບິ່ງແລ້ວຊິຕິດໃຈ! ແລະຍັງມີນ້ຳໝາກກ້ຽງອີກໃດ໋ ອັນນີ້ຂ້ອຍກໍຄັ້ນເອງ"

"ໂອ້ຍ! ໄດ້ໝໍດີປະຈຳໂຕແບບນີ້ຊິງຊິດີວັນດີຄືນແຫຼະເນາະ!" ສຽງວັນໝູ່ຂ້ອຍເວົ້າມາແຕ່ປະຕູ

"ບໍ່ປານນັ້ນດອກ!" ຂ້ອຍຕອບ

"ແລ້ວນີ້ໝໍວ່າເປັນຫຍັງ!"





"ຄວາມດັນຫຼຸດຄືຊິແມ່ນນອນໜ້ອຍ ໄດ້ພັກຈັກໜ້ອຍກໍຄືຊິໄຄຂຶ້ນແລ້ວລະ!"

"ບໍ່ແມ່ນຊິຄຸມເອົານ້ອງບໍ່ຈັກ ຈົນບໍ່ຫຼັບບໍ່ນອນນີ ແມ່ນບໍ່ອ້າຍຜາ?"

"ອ້າຍກໍຢາກຄຸມເອົາຢູ່ດອກ ແຕ່ໝູ່ເຈົ້າຫັ້ນຕິຄຸມແຕ່ວຽກຢູ່ໜ້າຄອມ ຈົນເດິກດື່ນມື້ໃດກະດາຍ!"

"ອາວເຮີ່ຍ!ບໍ່ເປັນຕິແນວນີ ຟ້າວເອົາເດີ້ຽວລູກໃຫຍ່ບໍ່ທັນຫຼິ້ນນຳກັນແຫຼະນີ"

"ວານບອກໃຫ້ແດ່ເທາະ!" ເຈົ້າເວົ້າພ້ອມສຽງຫົວທຸກຄົນໃນເຮືອນດັງຂຶ້ນພ້ອມກັນ

ຊີວິດຄູ່ຂອງພວກເຮົາ ດຳເນີນໄປດ້ວຍຄວາມຮຽບງ່າຍໜັກເອົາເບົາສູ້ດ້ວຍກັນມາ ຜ່ານຜ່າອຸປະສັກນັບນານາປະການ ລົ້ມລຸກນຳກັນມາຫຼາຍຄັ້ງ ຍາມສຸກກໍຮ່ວມເສບຍາມທຸກກໍບໍ່ເຄີຍປ່ອຍມືກັນ ແຕ່ແລ້ວສະຫວັນກໍຫຼິ້ນຕະຫຼົກກັບພວກເຮົາ ເປັນຕະຫຼົກທີ່ຂ້ອຍຫົວບໍ່ອອກ...

• • • • • • • • • • • • • • • • •

*"ມື້ນີ້ຄົບຮອບ10 ປີທີ່ເຮົາຮັກກັນ ແລະຄົບຮອບ 5 ປີ*
*ວັນແຕ່ງງານຂອງເຮົາ*
*ຄວາມຮັກຂອງເຮົາຍັງຄືເກົ່າຢູ່ແມ່ນບໍ່*
*ລູກເຮົາຄົງຈະໃຫຍ່ຂຶ້ນຫຼາຍແລ້ວນໍ*
*ລູກຍິ້ມງາມຄືແມ່ ຫຼືຕະຫຼົກໄດ້ພໍ່*

*ຂອບໃຈເດີທີ່ຢູ່ຄຽງຂ້າງ ແລະຢູ່ດູແລຂ້ອຍສະເໝີມາ*
*ເຈົ້າຄົງຈະລຳບາກຫຼາຍທີ່ໄດ້ລ້ຽງລູກຄົນດຽວ*
*ຂໍໂທດທີ່ຂ້ອຍຮັກສາສັນຍາໄວ້ບໍ່ໄດ້*
*ຂ້ອຍບໍ່ສາມາດຢູ່ດູແລເຈົ້າ ແລະລູກໄດ້ອີກແລ້ວ*
*ຕໍ່ນີ້ໄປເຈົ້າຕ້ອງດູແລຕົວເອງ ແລະລູກຂອງເຮົາໃຫ້ດີ*
*ເຈົ້າຕ້ອງເຂັ້ມແຂງ ແລະເລີ່ມຕົ້ນຊີວິດໃໝ່ທີ່ດີໃຫ້ໄດ້*
*ເຈົ້າກັບລູກຈະຢູ່ໃນຄວາມຊົງຈຳຂ້ອຍສະເໝີ.!!"*
*ຮັກເຈົ້າ ແລະລູກສະເໝີ ຕະຫຼອດໄປ*
*"ອ້າຍຜາ"*

ຂ້ອຍຮັບຊໍ່ດອກໄມ້ ພ້ອມອ່ານຂໍ້ຄວາມໃນເຈ້ຍສີບົວຮູບຫົວໃຈດ້ວຍນ້ຳຕາ

"ເມື່ອ 2 ປີກ່ອນມີຜູ້ຊາຍຄົນນຶ່ງ ໄດ້ໄປສັ່ງດອກໄມ້ຢູ່ທາງຮ້ານເຮົາ ພ້ອມຂຽນເຈ້ຍໃບນີ້ໄວ້ ແລ້ວໃຫ້ມາສົ່ງຢູ່ທີ່ນີ້ໃນມື້ນີ້" ຄົນສົ່ງດອກໄມ້ບອກກ່ອນຈະກັບໄປ

ເຈົ້າຈາກໄປ 2 ປີແລ້ວ, 2 ປີແລ້ວແຕ່ພາບເຈົ້າບໍ່ເຄີຍເລືອນລາງອອກໄປຈາກຄວາມຊົງຈຳ ຂ້ອຍຍັງຄົງເກັບທຸກສິ່ງທຸກເລື່ອງລາວຂອງເຈົ້າໄວ້ເໝືອນເດີມທຸກຢ່າງ ເຈົ້າຈາກຂ້ອຍກັບລູກໄປພ້ອມຄວາມເຈັບປວດ ຍ້ອນພະຍາດຮ້າຍມະເລັງ ຂ້ອຍບໍ່ຮູ້ຕອນນີ້ເຈົ້າໄປຢູ່ໃສຕອນນີ້ເຈົ້າຈະສຸກ ຫຼືທຸກ ຫຼືເຈົ້າກຳລັງເຝົ້າມອງເບິ່ງຂ້ອຍກັບລູກຢູ່ໃນດາວດວງໃດ

ດາວດວງນັ້ນ ດວງທີ່ເຮົາເຄີຍນັ່ງເບິ່ງນຳກັນ ຕອນນີ້





ເຈົ້າຈະຍັງເບິ່ງຄືກັນກັບຂ້ອຍ ຫຼືບໍ່! ມື້ນີ້ຂ້ອຍກັບມາທີ່ນີ້ອີກຄັ້ງມາພ້ອມຕົວແທນຂອງເຈົ້າຄືລູກຂອງເຮົາ ຂ້ອຍມາເພື່ອລໍອະທິຖານຂໍຮ້ອງຈາກດວງດາວນີ້ອີກຄັ້ງ ເຖິງຄັ້ງນີ້ຂ້ອຍຈະບໍ່ສາມາດຂໍໃຫ້ເຈົ້າຟື້ນຄືນມາຢູ່ກັບຂ້ອຍ ແລະລູກໄດ້ ແຕ່ຂ້ອຍຂໍຂໍພຽງໃຫ້ເຈົ້າໄດ້ຍິນ ໄດ້ຍິນສຽງຂອງຂ້ອຍ ຂໍໃຫ້ຂ້ອຍໄດ້ຍິນຂໍໃຫ້ຂ້ອຍໄດ້ເຫັນເຈົ້າອີກຈັກຄັ້ງແມ່ນໃນ...

## ຄວາມຝັນກໍຍັງດີ.!!



# ອະດີດທີ່ໃກ້ເຂົ້າມາ





"ສອນເພັດ!ຂ້ອຍແລະຄອບຄົວຈະໄປພັກຜ່ອນຢູ່ຕ່າງປະເທດ 6 ເດືອນ ເຊິ່ງຂ້ອຍມີນຶ່ງໂຄງການຈະໃຫ້ເຈົ້າເຮັດຖ້າແລະກ່ອນຂ້ອຍຈະກັບຕ້ອງໃຫ້ແລ້ວ ໂດຍມີງົບໃຫ້ 500 ລ້ານກີບ ພິເສດແມ່ນຈະໃຫ້ເຈົ້າອອກແບບເອງ ແລະເລືອກວັດສະດຸເອງເອົາທີ່ເຈົ້າມັກ ເພາະລູກຄ້າເຂົາຢືນຢັນມາວ່າຕ້ອງເປັນເຈົ້າເທົ່ານັ້ນ"

. . . . . . . . . . . . . . . . .

"ຖ້າບໍ່ເຮັດແບບນີ້ຊິເອົາເງິນມາແຕ່ໃສໄວ້ໃຊ້ຈ່າຍ ທັງເງິນຕ້ອງສົ່ງໃຫ້ລູກຮຽນຕ່າງປະເທດອີກ"

"ຂ້ອຍຮູ້ວ່າເຮົາຈຳເປັນຕ້ອງໃຊ້ເງິນຫຼາຍ ແຕ່ເຈົ້າຢ່າລືມວ່າທີ່ເຈົ້າໄດ້ເລື່ອນຕຳແໜ່ງມາເປັນຫົວໜ້າ ທີ່ເຈົ້າໄດ້ຮັບຄວາມໄວ້ວາງໃຈຂະໜາດນີ້ກໍເພາະຄວາມຊື່ສັດຂອງເຈົ້າໃດ່ ແລະລູກຄ້າຄົນນີ້ເຂົາກໍໄວ້ໃຈເຈົ້າຫຼາຍ"

"ໂອ່ຍ ຖ້າຂ້ອຍຮູ້ວ່າເຮັດແບບນີ້ແລ້ວໄດ້ເງິນດີປານນີ້ຂ້ອຍບໍ່ໂງ່ດັກດານເປັນຄົນດີຢູ່ຫຼາຍປີດອກ"

"ເຈົ້າຄືເວົ້າແບບນີ້ທີ່ຜ່ານມາຍັງບໍ່ພໍອີກບໍ່ຈັກເທື່ອແລ້ວທີ່ເຈົ້າເລືອກວັດສະດຸບໍ່ໄດ້ຄຸນນະພາບໃຫ້ລູກຄ້າ ເພື່ອເອົາເງິນໄປລົງໃສ່ການພະນັນຈົນໝົດ..."

"ເຊົາໆ ຢ່າມາເວົ້າຢູ່ນີ້ເທາະ ຖ້າລຳພັງແຕ່ເງິນເດືອນຊິພໍຢາໄສ້ຫຍັງ" ເວົ້າສຸດຄວາມສອນເພັດກໍຂັບລົດອອກໄປດ້ວຍຄວາມໂມໂຫ

ສອນເພັດເປັນນັກວິສາວະກອນທີ່ເກັ່ງຄົນນຶ່ງ ລາວເຮັດວຽກຢູ່ກັບບໍລິສັດຍັກໃຫຍ່ແຫ່ງນຶ່ງທີ່ມີຊື່ສຽງລະດັບຕົ້ນໆຂອງປະເທດ ລາວເປັນຄົນລະອຽດ ຮອບຄອບ ຂະຫຍັນ ແລະຊື່ກົງມາໂດຍຕະຫຼອດ ຈົນໄດ້ເລື່ອນຕຳແໜ່ງຈາກລູກນ້ອງຂຶ້ນມາເປັນຫົວໜ້າ ແຕ່ຫຼັງຈາກຮັບຕຳແໜ່ງບໍ່ດົນອຳນາດ ກໍເຮັດໃຫ້ລາວເລີ່ມປ່ຽນໄປຈາກໜ້າມືເປັນຫຼັງມື

"ຫົວໜ້າເຮືອນຫຼັງໃຫຍ່ປານນີ້ເຮົາຊິເທຄານສ່ຳນີ້ມັນຮັບນ້ຳໜັກບໍ່ໄຫວຕິ? ເຫຼັກໂຄງຫຼັງຄາທີ່ອ້າຍຈະໃຊ້ນ້ອງຄິດວ່າມັນບໍ່ໄດ້ມາດຕະຖານໃດ໋ ອີກຢ່າງເສົາຫັ້ນເຮົາໜ້າຈະເພີ່ມເຫຼັກໃສ່ຕື່ມອີກດີບໍ!"

"ເປັນແຕ່ຫົວໜ້າຮັບເໝົາ ຢ່າມາເຮັດເກີນໜ້າທີ່ ຂ້ອຍເປັນຫົວໜ້າພວກເຈົ້າຂ້ອຍເປັນຄົນອອກແບບ ແລະຄິດໄລ່ມາພໍແຮງ ເຈົ້າວ່າຂ້ອຍເຮັດວຽກນີ້ມາຈັກປີແລ້ວ ເລື່ອງສ່ຳນີ້ບໍ່ຖ້າໃຫ້ຄົນສ່ຳພວກເຈົ້າມາບອກດອກທີ່ສຳຄັນຂ້ອຍເປັນຄົນຈ່າຍເງິນໃຫ້ພວກເຈົ້າ ຂ້ອຍສັ່ງຫຍັງກໍເຮັດຕາມ ຖ້າເຮັດບໍ່ໄດ້ຂ້ອຍກໍຈະຈ້າງຄົນໃໝ່"ເວົ້າແລ້ວສອນເພັດກໍຍ່າງໜີຂຶ້ນລົດແລ້ວຂັບອອກໄປເລີຍ

. . . . . . . . . . . . . . . . .

"ງາມຫຼາຍສອນເພັດ ເຈົ້າອອກແບບ ແລະເລືອກສີໄດ້ງາມຫຼາຍ ເປັນເຮືອນທີ່ສາມາດຕອບໂຈດໃຫ້ຄົນໃນຍຸກສະໄໝໃໝ່ນີ້ໄດ້ທຸກຂໍ້ ວິນລາຊັ້ນດຽວຍົກພື້ນສູງມີກິ່ນອາຍແບບໂມເດີນ





(Modern) ບວກໃສ່ຫຼັງຄາຊົງໝາແຫງນທີ່ມີຫຼາຍຊັ້ນ ມັນຄືສະເໜ່ທີ່ສະກົດທຸກສາຍຕາ ໂຕເຮືອນໂທນສີນ້ຳຕານເຂັ້ມອົມດຳບົ່ງບອກເຖິງຄວາມພູມຖານ ແລະໜ້າຢຳເກງແບບຜູ່ນຳໄດ້ຢ່າງລົງຕົວ... ຂ້ອຍໄວ້ໃຈຄົນບໍ່ຜິດອີຫລີ ຂອບໃຈເຈົ້າຫຼາຍໆເດີ ເຈົ້າເຮັດໃຫ້ຂ້ອຍປະທັບໃຈຫຼາຍ"

"ແລ້ວລູກຄ້າທີ່ຈະມາຊື້ແມ່ນໃຜລະຫົວໜ້າ"

"ສອນເພັດເຈົ້າເອງກໍເຮັດວຽກໃຫ້ບໍລິສັດມາຫຼາຍສິບປີ ແຕ່ຄາວຍັງໜຸ່ມໆ ຈາກກຳມະກອນລາຍວັນຂຶ້ນມາເປັນຫົວໜ້າຕອນນີ້ຂ້ອຍກໍກຳລັງຈະກະສຽນຕົວເອງແລ້ວໃຫ້ລູກຊາຍຂຶ້ນມາບໍລິຫານຕໍ່ ຂ້ອຍກັບຄອບຄົວຈຶ່ງປຶກສາກັນດີແລ້ວວ່າເຮືອນຫຼັງນີ້ທີ່ໃຫ້ເຈົ້າອອກແບບເອງ ເລືອກວັດສະດຸເອງກໍເພາະມັນຈະເປັນເຮືອນຂອງເຈົ້າ ຂ້ອຍມອບໃຫ້ເຈົ້າຖືວ່າເປັນຂອງຂວັນເຈົ້າ ແລະຄອບຄົວສາມາດຍ້າຍເຂົ້າມາຢູ່ໄດ້ເລີຍ ແຕ່ມີຂໍ້ແມ້ຄືເຈົ້າຫ້າມຂາຍເດັດຂາດ"

. . . . . . . . . . . . . . . . .

"ຖ້າຂ້ອຍຮູ້ວ່າເຮືອນຫຼັງນີ້ຈະເປັນຂອງເຮົາ ຂ້ອຍຈະເລືອກວັດສະດຸທີ່ດີທີ່ສຸດແພງທີ່ສຸດມາໃຊ້" ສອນເພັດເວົ້າພ້ອມເອົາກຳປັ້ນທຸບພື້ນດ້ວຍຄວາມເຫຼືອໃຈ ເຖິງຈະຄິດໄດ້ຕອນນີ້ກໍແກ້ໄຂຫຍັງບໍ່ທັນແລ້ວ ເຮືອນໄດ້ສ້າງສຳເລັດດ້ວຍວັດສະດຸທີ່ລາຄາຖືກໆທັງຫຼັງ

ຫຼັງຈາກເຂົ້າມາຢູ່ໄດ້ພຽງປີດຽວຫຼັງຄາບາງບ່ອນກໍເລີ່ມ





ມີຮູຮົ່ວ ສີກໍເລີ່ມລອກ ທັງຝາບາງບ່ອນກໍເລີ່ມແຕກເປັນຮອຍປານແຫງຊຽດກາງນາ

ແລ້ວໃນຄ່ຳຄືນນຶ່ງຂອງເດືອນພຶດສະພາກໍເກີດມີພາຍຸລົມແຮງ ຝົນຟ້າຄະນອງຂຶ້ນຈົນຫຼັງຄາເຮືອນເປີດໄປແຖບໃຫຍ່ນຶ່ງ ສຽງໂຄງເຫຼັກຫຼັງຄາກໍດັງອຶດແອດໆຄືຈັ່ງຊິຫັກໂຍນລົງບາດໃດບາດນຶ່ງ ຈົນສອນເພັດແລະເມຍບໍ່ກ້າອອກນອກຫ້ອງ ຈົນຝົນເລີ່ມຮວ່າຍລົມພາຍຸເລີ່ມອ່ອນກຳລັງລົງ ສອນເພັດຈຶ່ງອອກຈາກຫ້ອງນອນມາເລາະເບິ່ງຄວາມເສຍຫາຍພາຍໃນເຮືອນ ແລະໃນຂະນັ້ນເອງເພດານກໍໄດ້ຫັກພັງລົງພ້ອມໄມ້ສີ່ແປດທີ່ຍຶດຄານກໍຕົກລົງມາທັບຕົວຂອງລາວ

"ຊ່ອຍແດ່ ຊ່ອຍແດ່ ວັນຊ່ອຍຂ້ອຍແດ່ ໂອ່ຍ...!" ສອນເພັດຮ້ອງຫາຜູ່ເປັນເມຍດ້ວຍຄວາມເຈັບປວດ

"ໂອ່ຍຕາຍແລ້ວ!" ວັນຮ້ອງອຸທານຂຶ້ນພ້ອມແລ່ນມາຫາຜົວຟ້າວດຶງທ່ອນໄມ້ພ້ອມເສດເພດານທີ່ທັບຖົມຮ່າງສອນເພັດອອກ ກ່ອນຈະນຳສົ່ງໂຮງໝໍ

. . . . . . . . . . . . . . . . .

"ຈາກເຫດການຄັ້ງນີ້ເຮັດໃຫ້ຂ້ອຍເຫັນພາບ ແລະເຂົ້າໃຈຄວາມຮູ້ສຶກຂອງຄົນທີ່ຕ້ອງສູນເສຍຂອງຮັກທັງຊັບສິນຢ່າງຫຼວງຫຼາຍ ເພາະຄວາມເຫັນແກ່ໂຕຂອງຂ້ອຍ ຕອນນີ້ອະດີດທີ່ເຄີຍເກີດກັບຄົນເຫຼົ່ານັ້ນ ມັນໄດ້ແລ່ນນຳຂ້ອຍມາເຖິງປັດຈຸບັນນີ້ແລ້ວ ຂໍໂທເດີທີ່ຜົນກຳຄັ້ງນີ້ຕ້ອງເຮັດໃຫ້ເຈົ້າມາຮັບພາລະ ດູແລຜົວທີ່ຕ້ອງມີຊີວິດຢູ່ເທິງລໍ້ລົດເຂັນແບບນີ້."



# ປີກແຫ່ງຮັກ



ອາກາດທີ່ຮ້ອນອົບເອົ້າໄຮ້ສາຍລົມຂອງເດືອນເມສາແຜດເຜົາຖະໜົນຮາດຢາງ ອຸນຫະພູມຢາກວ່າຫອດໄຂກໍຈົນສຸກພຸ້ນແລ້ວ ແຕ່ຊາຍແກ່ຊະລາອາຍຸຄົງບໍ່ຕໍ່າກວ່າ 80 ປີບໍ່ສົນໃຈນໍາລັງສີຄວາມຮ້ອນແຕ່ຢ່າງໃດຍ່າງກົ້ມໜ້າໄປດ້ວຍຄວາມໄວຕໍ່າບໍ່ເກີນ 2 ກິໂລແມັດ/ຊົ່ວໂມງ

"ພໍ່ຕູ້ພໍ່ຕູ້ແມ່ນເຈົ້າຊິໄປທາງໃດ,ມາ! ຂຶ້ນມາລົດພີ້ເຮົາຊິໄປສົ່ງ" ເວົ້າແລ້ວຂ້ອຍກໍໄຂປະຕູໃຫ້ລາວໂກ້ຍຂຶ້ນລົດພ້ອມສໍາພາລະຖົງມ້າດາວນຶ່ງໜ່ອຍ ແລະກະເປົາເປ້ທີ່ລວມກັນແລ້ວນໍ້າໜັກບໍ່ຕໍ່າກວ່າ 15 ກິໂລ

"ເຈົ້າມາແຕ່ໃສ?"

"ມາແຕ່ຢາມລູກສາວ ນອນທາງສອງຄືນແລ້ວ ເງິນບໍ່ມີພໍກີບຊິຈ້າງລົດ ຄໍ່າໃສນອນຄອນໃສຢູ່"

"ໄປຢາມລູກ ເຂົາກໍບໍ່ເອົາເງິນໃຫ້ເຈົ້າແດ່ບໍຈັກເລັກຈັກໜ້ອຍພໍຄ່າລົດຄ່າລາງ"

"ໂອ່ຍ ຫຼານເອີ່ຍ ລູກເຂົາກະບໍ່ມີ ຜົວເຂົາກະຕາຍປະເປັນແມ່ໝ້າຍລູກສາມຄົນ ພໍ່ຕູ້ຄິດຮອດລູກ ຄິດຮອດຫຼານເລີຍໄປຫາ ຕອນໄປກະຍ່າງສາມສີ່ມື້ກະຈັ່ງຮອດ ຄ່ອຍຍ່າງໄປນີ້ແຫຼະເມື່ອຍໃສກໍພັກ"

ຟັງພໍ່ຕູ້ເວົ້າມາຮອດນີ້ຂ້ອຍປາກບໍ່ໄດ້ໄອບໍ່ດັງ ມັນຈຸກຂຶ້ນມາຄາຢູ່ຄໍ ພາບຜູ່ເຖົ້າສອງຄົນປາກົດຂຶ້ນມາໃນຫົວຢ່າງຊັດເຈນ ຜູ່ເຖົ້າຄົນນຶ່ງຫອບສັງຂານຕົວເອງຍ່າງຫຼາຍຮ້ອຍກິໂລແມັດ ຜ່ານຜ່າແປວແດດແຜດເຜົາເພື່ອໄປຫາລູກສາວ





"ພໍ່ຕູ້ວ່າຍ່າງມາສອງຄືນແລ້ວຫວະ ແລ້ວມື້ຄືນກ່ອນຝົນຕົກເຈົ້າໄປພັກຢູ່ໃສ?"

"ໂຊກດີຫຼານເອີ່ຍ ບຸນຫົວພໍ່ຕູ້ຍັງມີ ໄຄແຕ່ໃກ້ວັດ ເລີຍໄປຂໍຊິນຫົວນອນຢູ່ວັດ"

ຄໍາຕອບນີ້ເຮັດໃຫ້ຂ້ອຍຫາຍໃຈໂລ່ງມາແດ່ ຄິດວ່າພໍ່ຕູ້ນອນຕາກຝົນແຄມທາງ

"ຖ້າພໍ່ຕູ້ບໍ່ມີເງິນແລ້ວພໍ່ຕູ້ໄປກິນເຂົ້າຢູ່ໃສຊັ້ນ?" ພໍ່ຕູ້ມິດໄປບຶດນຶ່ງ ກ່ອນຈະຈົກເອົາຫໍ່ນ້ອຍໃນຖົງອອກມາ

"ກ່ອນຊິອອກມາລູກສາວຫໍ່ເຂົ້າໃຫ້ ມີແຈ່ວປາແດກແລະປາແຫ້ງສອງໂຕ ພໍ່ຕູ້ກໍກິນອັນນີ້ແຫຼະ ມື້ຄືນກ່ອນໄປນອນຢູ່ວັດ ຄູບາເພິ່ນເອົາເຂົ້າໜົມໃຫ້ຫຼາຍທໍ່ພໍໄດ້ກິນອຸ່ນທ້ອງ"

ຂ້ອຍຫຼຽວເບິ່ງຫໍ່ເຂົ້າທີ່ແຂງກະແດ້ງ ນ້ອຍກ່ອນກໍາປັ້ນໜ້ອຍນຶ່ງ "ອີ່ຫຍັງຊິປານນີ້ນໍຊີວິດ" ຂ້ອຍຄິດໃນໃຈ ແຕ່ເບິ່ງໃບໜ້າຂອງພໍ່ຕູ້ບໍ່ມີຄວາມເສົ້າໝອງເລີຍແມ່ນແຕ່ໜ້ອຍ

"ແລ້ວເປັນຫຍັງພໍ່ຕູ້ຄືບໍ່ລັດລົດ ລະຂໍໄປນໍາເຂົາແດ່ຊັ້ນເຂົາຈອດຢູ່ດອກ ລົດກາຍໄປກາຍມາຫຼາຍຄັນຢູ່"

"ບໍ່ກ້າແຫຼະຫຼານເອີ່ຍ ບໍ່ມີຄ່າຕອບແທນຫຍັງໃຫ້ເພິ່ນເຮົາຄືນບໍ່ມີ"

"ບໍ່ມີກໍຂໍໄປນໍາເຂົາຊື່ໆກະໄດ້ ເຮົາກໍບໍ່ເຫັນຊິຢາກໄດ້ຫຍັງນໍາ"

"ແນວນັ້ນກໍຂອບໝົກຂອບໃຈຫຼາຍໆແຫຼະຫຼານເອີ່ຍຂໍໃຫ້ຢູ່ດີມີແຮງ ອາຍຸໝັ້ນຂວັນຍືນ ໃຫ້ຮັ່ງໃຫ້ມີ"





ຂ້ອຍຕອບຮັບຄໍາອວຍພອນຂອງລາວດ້ວຍຮອຍຍິ້ມ ມັນມີຄ່າທີ່ສຸດເທົ່າທີ່ເຄີຍໄດ້ຮັບ ເຫດການໃນເທື່ອນີ້ມັນເຮັດໃຫ້ຂ້ອຍນຶກເຖິງເລື່ອງລາວນຶ່ງໃນອະດີດທີ່ຂ້ອຍບໍ່ເຄີຍລືມ

. . . . . . . . . . . . . . . . . . . .

"ແມ່ນພວກເຈົ້າຊິໄປຫາເຮົາເຮັດຫຍັງຢູ່ໂຮງຮຽນ ເຮົາອາຍຮູ້ບໍ່ຮູ້ຫວາ ເບິ່ງເຄື່ອງເຈົ້ານຸ່ງດູຈົນບໍ່ເຫັນຮອດລາຍ"

"ແນວທາງໂຮງຮຽນເພິ່ນເຊີນພໍ່ແມ່ໄປເດ"

"ເຊີນກະບໍ່ຕ້ອງໄປເຮົາເຂົ້າຫ້ອງໃຫຍ່ແລ້ວເຮົາອາຍໝູ່ຮູ້ບໍ່ ຖ້າເຮົາເຫັນເຈົ້າໄປຫາຢູ່ໂຮງຮຽນອີກເຮົາຊິອອກໂຮງຮຽນໂລດ"

"ຕໍ່ໄປພໍ່ກັບແມ່ຊິບໍ່ໄປອີກແລ້ວລະ ມາມາ ມາກິນເຂົ້າກ່ອນລູກ"

ແຈ່ວໜໍ່ໄມ້ສົ້ມກັບປີ້ງຂຽດອີກລະ ໜ້າເຮົາຊິເປັນກົບເປັນຂຽດລະນິ ຄືບໍ່ມີຊີ້ນມີເຫຍື່ອມາໃຫ້ກິນຄືເຮືອນອື່ນແດ່"

"ເຮົາບໍ່ມີເງິນເດລູກເອີ່ຍ ກົບຂຽດກະແມ່ນພໍ່ໄປຊອກກ້ານ..."

"ພໍໆ ບໍ່ຕ້ອງເວົ້າ ເຮົາບໍ່ຢາກຟັງ ຖ້າບໍ່ມີຊີ້ນເຮົາກະບໍ່ກິນດອກ ເປັນຫຍັງເຮົາຄືບໍ່ໄປເກີດຢູ່ເຮືອນຄົນຮັ່ງຄົນມີພຸ້ນຫວະ ຈັ່ງຊິບໍ່ໄດ້ກິນແຕ່ແຈ່ວທຸກມື້"

ແລ້ວຫຼັງຈາກນັ້ນຄາບເຂົ້າມື້ຕໍ່ມາຂ້ອຍກໍໄດ້ກິນປີ້ງຊີ້ນສົມໃຈຢາກ





"ແມ່ ຜົມເຈົ້າຍາວໆງາມໆເປັນຫຍັງຄືຕັດສັ້ນແທ້?"

"ແມ່ຮ້ອນກະເລີຍຕັດຖິ້ມ ມຸດໝັດຢູ່ຍາກ"

"ກະວ່າຢູ່ເຮົາກະຮ້ອນຕາງ" ເວົ້າແລ້ວຂ້ອຍກໍມ້ວນຕ່ອນຊີ້ນເຂົ້າປາກຫຍໍ້ບ້ວຍໆຢ່າງແຊບນົວໂດຍທີ່ບໍ່ສົນໃຈນໍາຫຍັງທັງໝົດ ຈົນເວລາຜ່ານໄປສິບກວ່າປີ ຂ້ອຍຈຶ່ງໄດ້ມາຮູ້ຄວາມຈິງທີ່ເຮັດໃຫ້ຂ້ອຍຢາກຈະຕາຍໄປຈາກໂລກນີ້ໃຫ້ມັນແລ້ວສາ

"ແມ່ໃຈຂ້ອຍວ່າທີ່ເຈົ້າມັກເຈັບອອດໆແອດໆນີ້ບໍ່ແມ່ນເປັນນໍາເຈົ້າຂາຍຜົມແຕ່ຄາວນັ້ນບໍ! ໄທເຮົາໃຜກໍຖືແຕ່ຄາວປູ່ຍາມາເພິ່ນວ່າຜົມເປັນເຈົ້າຢູ່ຫົວບໍ່ແມ່ນແນວຊື້ແນວຂາຍ"

"ຈໍາເປັນແລ້ວແນວເຂົ້າຂາດແລງແກງຂາດໝໍ້ ຊອກໃສບໍ່ມາຫາໃສບໍ່ທັນກໍຈໍາເປັນໄດ້ຂາຍ ແຕ່ຂ້ອຍວ່າເປັນນໍາເຮົາເຖົ້າລົງນີ້ລະພະຍາດພະເຍົາກະຖາມຫາເປັນທໍາມະດາ..."

ຄໍາເວົ້າຂອງແມ່ທີ່ລົມກັບປ້າຈັນເຖິງແມ່ນວ່າໄດ້ຍິນຜ່ານຝາເຮືອນແຕ່ກໍຊັດທຸກຖ້ອຍທຸກຄໍາ ມັນປຽບເໝືອນລູກທະນູນັບຮ້ອຍລ້ານອັນສຽບແທງລົງກາງໝາກກະດອງໃຈ ຄວາມວ່າເຫຼືອໃຈໃຫ້ເຈົ້າຂອງ ຂ້ອຍພໍຢາກມຸດດິນແກ່ນຕາຍຕອນນັ້ນເລີຍ ຖ້າບໍ່ຍ້ອນຄວາມເອົາແຕ່ໃຈຂອງຂ້ອຍໃນມື້ນັ້ນ ບາງທີເລື່ອງນີ້ອາດຈະບໍ່ເກີດຂຶ້ນເລີຍກໍເປັນໄດ້ ແລ້ວຍັງເລື່ອງງານໂຮງຮຽນໃນມື້ນັ້ນອີກ ສອງເຖົ້າທີ່ຂ້ອຍບໍ່ຢາກໃຫ້ໄປຫາເພາະອາຍໝູ່ຄູ່ ພວກເພິ່ນພາກັນຫອບສັງຂານໄປນັ່ງເຝົ້າຖ້າເບິ່ງຂ້ອຍແຕ່ເຊົ້າຈົນວ່າທ່ຽງໂດຍທີ່ເຂົ້າບໍ່ຕົກທ້ອງພໍເມັດ ທີ່ເພິ່ນວ່າຄຸນພໍ່ທໍ່ພູເຂົາກ້າ ຄຸນແມ່ທໍ່ຟ້າກັບແຜ່ນດິນ ຂ້ອຍວ່າມັນຍັງ

ໜ້ອຍໄປ...

. . . . . . . . . . . . . . . .

ຫຼັງຈາກສົ່ງພໍ່ຕູ້ຮອດຢ້າວຮອດເຮືອນແລ້ວ ລາວກໍໃຫ້ຂ້ອຍຖ້າຢູ່ລົດຄາວນຶ່ງລາວຟ້າວຍ່າງເຂົ້າໄປໃນເຮືອນຫຼັງນ້ອຍທີ່ແອ້ມຝາໄມ້ເຮ້ຍ ແລະມຸ່ງດ້ວຍໃບຄໍ້ ກວ້າງບໍ່ເກີນ 6 x 8 ແມັດ ແລ້ວຖືຖົງຢາງນຶ່ງອອກມາໃຫ້ຂ້ອຍ

"ພໍ່ຕູ້ບໍ່ມີຫຍັງຈະຕອບແທນຫຼານ ມີແຕ່ໜໍ່ໄມ້ບັກຫຼານຊາຍມັນໄປຊອກມາເຊົ້ານີ້ ໃຫ້ຫຼານເອົາເມືອແກງເດີ້"

"ພໍ່ຕູ້ຢູ່ກັບຫຼານສອງຄົນນີ້ບໍ່?"

"ແມ່ນ ແມ່ມັນກໍແມ່ນລູກສາວກົກພໍ່ຕູ້ນີ້ແຫຼະ ພໍແຕ່ເກີດມັນຫວິດຕີນສິ້ນກໍຕາຍສ່ວນພໍ່ມັນທໍາອິດກະວ່າໄປຫາເງິນໄປແລ້ວກໍບໍ່ເຄີຍມາລົ້ມາຫຼຽວຈັກເທື່ອ ແຕ່ກ່ອນພໍ່ຕູ້ຍັງພໍມີແຮງຫາຮັບຈ້າງຫັ້ນໆນີ້ໆພໍໄດ້ຢູ່ໄດ້ກິນ ພໍມີເງິນໃຫ້ມັນຮຽນໜັງສືແຕ່ດຽວນີ້... ໄຄແຕ່ມັນໃຫຍ່ຮູ້ຈັກຄວາມແລ້ວ ກໍມີແຕ່ມັນນີ້ແຫຼະຫາລ້ຽງສູ່ມື້"

ຄໍາຕອບຂອງພໍ່ຕູ້ເຮັດໃຫ້ໝາກຫົວໃຈຂ້ອຍອ່ອນຕຸບລົງອີກຄັ້ງ ຂ້ອຍຍ່າງໄປຈັບເອົາປຶ້ມສາມເຫຼັ້ມໃນລົດເພື່ອໄວ້ໃຫ້ຫຼານລາວໄດ້ຮຽນອ່ານ ພ້ອມທຶນຮອນເລັກນ້ອຍລັກແໜບໃສ່ໃນປຶ້ມແລ້ວຢື່ນໃຫ້ພໍ່ຕູ້ກ່ອນຈະລາກັບ

ແລະໃນເຂົ້າແລງມື້ນັ້ນເອງຂ້ອຍກໍໄດ້ກິນແກງໜໍ່ໄມ້ແຈ່ວໜໍ່ໄມ້ສົ້ມ ແລະປີ້ງຊຽດຝີມືແມ່ທີ່ແຊບທີ່ສຸດ.



# ສ້າງພາບ





"ຂ້ອຍຍັງຢູ່ກັບສາຍຕາທີ່ດູຖູກ ແລະຄໍາຢຽບຫຍາບຂອງໄທບ້ານໄດ້ເຈົ້າເອງກໍຕ້ອງທົນຢູ່ກັບຄວາມຮູ້ສຶກຂອງຕົວເອງໃຫ້ໄດ້ຄືກັນ"

. . . . . . . . . . . . . . . . . . .

"ນວນ ມຶງນີ້ຕັ້ງບໍ່ເປັນຄ່າແທ້ເນາະ ຈ້າງໆເອົາຜົວມາລະໂຕຜັດລ້ຽງລູກຢູ່ເຮືອນຜູ່ດຽວກູລະອາຍແທນເດບໍ່ສົມວ່າເປັນຫຼານກູຈັກດີ້ບໍ່ອາຍຫວະໄທບ້ານໄທເມືອງເຂົາວ່າຂວັນແຕ່ເໜືອຮອດໃຕ້"

"ເຮົາບໍ່ໄດ້ໄປຂໍເຂົ້າເຮືອນໃຜມາລ້ຽງລູກເຮົານ່າ ລູກຄົນດຽວເຮົາລ້ຽງໄດ້ ໄທບ້ານເຮົາກໍໄດ້ຍິນມີແຕ່ເຈົ້ານີ້ແຫຼະເວົ້າຢູ່ຕະຫຼອດ"

"ແທ້ ຄົນອື່ນເຂົາຊິມາເວົ້າຕໍ່ໜ້າມຶງຫວາ"

"ຢ່າເຂົາແຫຼະລີ້ນບໍ່ມີກະດູກ ເຂົາບໍ່ເມື່ອຍກະປະເຂົາ





ວ່າໄປ"

"ລຸງກະຢາກຊ່ອຍຢູ່ ແຕ່ຊິຊ່ອຍແນວໃດ ໂຕເຮັດໂຕເອງເອົາຜົວກະໄປເອົາຜົວເຂົາ ໂຕກະໄດ້ລ້ຽງລູກຢູ່ເຮືອນຜູ່ດຽວພໍ່ຊິໃຫ້ລູກເອີ້ນກະບໍ່ມີ"

"ໃຜວ່າບໍ່ມີ ເຈົ້າບໍ່ໄດ້ຍິນເບາະມັນເອີ້ນຢູ່ຊູ່ມື້ ກະພໍ່ມັນລະບໍ່ອັນນັ້ນ" ເອື້ອຍຂ້ອຍອົດບໍ່ໄດ້ເລີຍຕອບຂຶ້ນແທນ

"ກະອັນນັ້ນແຫຼະແນວບໍ່ມີພໍ່ນໍາເຂົາກະໄດ້ເອີ້ນລຸງວ່າພໍ່ ຈັ່ງແມ່ນຊາດເນາະພໍ່ມັນບໍ່ມີປັນຍາລ້ຽງຫວາ ຈັ່ງຄ່ອຍບໍ່ມາຫາຈັກເທື່ອ"

"ປັນຍາລ້ຽງທັນມີເຂົາໂອນເງິນມາເດືອນລະຫຼາຍສິບລ້ານພຸ້ນນະທໍ່ແຕ່ບໍ່ໄດ້ປ່າວປະກາດໃຫ້ໃຜຮູ້ຊື່ໆ" ເອື້ອຍຂ້ອຍເວົ້າທັ່ງໃສ່ພ້ອມດຶງແຂນຂ້ອຍລຸກໜີອອກຈາກວົງສົນທະນານັ້ນ

"ຢ່າສູ່ໄປຫົວຊາເທາະ ເຖົ້າລ້າບໍ່ຮູ້ຈັກຄວາມເວົ້າໃຫ້ຄົນອື່ນເປັນໆ ບໍ່ເບິ່ງລູກຫຼານເຈົ້າຂອງຈັກໜ້ອຍ" ເອື້ອຍທັງເວົ້າທັງຫຼັບຕາຊັ່ງ

. . . . . . . . . . . . . . . . . . .

ກຶ໊ງ ກຶ໊ງ ກຶ໊ງ ສຽງໂມງປຸກດັງຂຶ້ນເປັນເວລາ 2:30 ໂມງໄດ້ເວລາທີ່ຂ້ອຍຕ້ອງລຸກ

"ມື້ນີ້ຄືຕື່ນແຕ່ເດິກແທ້"

"ຢູ່ຕະຫຼາດນ້ອຍເຂົາສັ່ງເຂົ້າໜົມຫຼາຍຢ້ານເຮັດບໍ່

ທັນ ໄປສວາຍຢ້ານເຂົາເມືອປະ"

"ລະບໍ່ເອົາປາສົ້ມໄປນຳຫວາຊັ້ນ?"

"ບໍ່! ປະມານ 7 ໂມງ ແມ່ປີຢູ່ກົກກັງງລາວຊິມາແວ່ເອົາ ນຳຢູ່ເຮືອນ ຖ້າເຮົາຍັງບໍ່ມາລະຂາຍໃຫ້ແດ່ ແມ່ໄລ່ລາຄາສົ່ງໃຫ້ ລາວເດີ"

ເວລາຜ່ານໄປ 2 ຊົ່ວໂມງ ກະຕ່າເຂົ້າໜົມຖົ່ວແປບ ກວ່າ 200 ກ້ອນ ແລະຖົງຜັກນາງອາງຮ້າຍພ້ອມແພປູກໍາກຸງມ ພ້ອມຢູ່ເທິງລົດຈັກ ຜ່ານໄປອີກ 10 ນາທີ ເຄື່ອງຂອງທຸກຢ່າງ ກໍຖືກຈັດວາງຢູ່ໂຕະນ້ອຍກາງຕະຫຼາດຮຽບຮ້ອຍ

"ແຊບດີເດີ ເຂົ້າໜົມໂຕເຮັດເອງຫວາ ແຂກມາປະຊຸມ ໃຜກໍມັກໃດ່ຫັ້ນ"

"ເຮັດເອງ ຫາແຕ່ແລ້ວໃໝ່ໆ, ກີ້ນີ້ເອື້ອຍພຸດລາວກະ ມາເອົາ 150 ກ້ອນ ມື້ນີ້ເຈົ້າບໍ່ເອົາເບາະ?"

"ເອົາໆ ໃສ່ຖົງໄວ້ໃຫ້ເອື້ອຍ 50 ກ້ອນເດີ້ ເລາະຊື້ເຄື່ອງ ກ່ອນລະຊິມາແວ່ເອົາ"

ຜ່ານໄປອີກຊົ່ວໂມງຄົນກໍເລີ່ມເພີກຍັງເຫຼືອແຕ່ແມ່ຄ້າ ຊ່ວງນີ້ຖືເປັນເວລາທອງທີ່ເຮົາຈະໄດ້ຊື້ເຄື່ອງໃນລາຄາທີ່ຖືກ ກວ່າ ເພື່ອຈະໄດ້ເອົາໄປຂາຍຕໍ່ໃນຕະຫຼາດແລງ ເປັນຕົ້ນໜໍ່ຂ່າ ປາດຸກນາ ຫວາຍຂົມໝາກແຕງ ແລະປະເພດເຫັດຕ່າງໆ

"ໄປທາງໃດມາໄດ້ເຄື່ອງມາຫຼາຍແທ້" ຕູ້ເຄນທີ່ມານັ່ງ ຫຼິ້ນຢູ່ເຮືອນທ້ວງຂຶ້ນ

"ກັບແຕ່ຕະຫຼາດລະໄປງົມກີ້ ກັບທອຍຢູ່ໜອງໂນມາ





ຮ້ານອາຫານເຂົາສັ່ງ 10 ໂລ ລະແວ່ເອົາຜັກໝອກ ກັບໝາກ ມີ້ນຳປ້ານີ ຊິເອົາໄປລົງຕະຫຼາດແລງ"

"ຈັ່ງແມ່ນດຸເນາະ ບໍ່ຢູ່ບໍ່ເຊົາ ບໍ່ເພື່ອລູກຫຼານຢູ່ເຮືອນຫັ້ນ ນ່າເຄື່ອງສວນມີເຕັມ ທໍ່ໃຫ້ເອົາໄປສົ່ງເຂົາຊື່ໆຍັງອາຍລະ"

"ແນວມັນລະຈ້າເອີ່ຍ ມີຜົວລະໂຕລ້ຽງລູກຜູ່ດຽວ ຖ້າບໍ່ ເຮັດມັນຊິເອົາຫຍັງມາລ້ຽງລູກມັນ" ລຸງພອນເວົ້າດອດຂຶ້ນຕື່ມ

"ເຈົ້ານີ້ກະຕັ້ງໂພດເນາະ ຫາແຕ່ແນວເວົ້າໃຫ້ມັນ ອັນ ລູກຫຼານເຈົ້າຢູ່ເຮືອນຫັ້ນດີຫຼາຍລະຕິ ສົມພໍດອກຈັ່ງບໍ່ມີເລື່ອງ ງາມໜ້າໄດ້ຂຶ້ນວ່າຄວາມປະຜົວໂຕຍ້ອນໄປຕິດຜົວເຂົາຫັ້ນ ລະເນາະ" ແລະເປັນອີກຄັ້ງທີ່ເອື້ອຍຂ້ອຍຕອບແທນ ເຮັດໃຫ້ ລຸງພອນລຸກໜີເກືອບບໍ່ທັນ

"ຖ້າເມື່ອຍກໍພັກແດ່ກະໄດ້ ຄັນມັນບໍ່ໄຫວກະໄຫ້ອອກ ມາໂລດ ບໍ່ມີໃຜວ່າໃຫ້ດອກ ບໍ່ຕ້ອງເຂັ້ມແຂງຕະຫຼອດເວລາມີ ຫຍັງກໍຢ່າເກັບໄວ້ແຕ່ກັບໂຕຫຼາຍ" ເອື້ອຍຂ້ອຍຢ່າງມາເວົ້າ ພ້ອມຕົບບ່າໃນຂະນະທີ່ຂ້ອຍພວມລ້າງຜັກຢູ່

"ຂ້ອຍອ່ອນແອໃຫ້ລູກເຫັນບໍ່ໄດ້ ຄວາມອາຍເປັນໂຕ ແນວໃດບໍ່ຮູ້ດອກ ຮູ້ແຕ່ຄວາມອຶດຄວາມຫິວມັນເປັນຕາຢ້ານ ແລະເຈັບປວດຫຼາຍກວ່າ ຍາມລູກໄຫ້ຕ້ອງມີນົມໃຫ້ລູກກິນ ຍາມ ລູກເຈັບເປັນຕ້ອງມີເງິນພາໄປຫາໝໍ ຮູ້ພຽງເທົ່ານີ້ມັນກໍເກີນພໍ ແລ້ວທີ່ຈະໂບກໜ້າໃຫ້ໜາຂຶ້ນໄດ້" ຂ້ອຍຕອບພ້ອມເຊັດນ້ຳຕາ

. . . . . . . . . . . . . . . . . . . .





"ຂ້ອຍຢາກໃຫ້ເຈົ້າກັບລູກມາຢູ່ກັບຂ້ອຍ ຖ້າຕົກລົງກໍ ກຽມເຄື່ອງຖ້າ ອີກສອງມື້ຊິຂຶ້ນໄປຮັບ"

"ເຈົ້າຊິມາຢາກຢູ່ນຳລູກຫຍັງຕອນນີ້ ຕອນຂ້ອຍຖືພາ ເອ່ງເລ່ງໆ ເຈົ້າໄປທ່ຽວຫຼິ້ນປານຜູ່ບ່າວນ້ອຍ ຂ້ອຍເຈັບທ້ອງເກີດ ລູກຈົນຊິເປັນຊິຕາຍເຈົ້າໄປມີຄວາມສຸກຢູ່ກັບຜູ່ສາວ ຕອນຂ້ອຍ ອຶດຫຼັບທົນນອນລ້ຽງລູກເຈົ້າໄປນອນສຳລານຢູ່ກັບເຂົາ ຍາມ ລູກເຈັບລູກເປັນເຈົ້າເຄີຍມາຫາລູກຈັກເທື່ອ ຕອນຂ້ອຍຕ້ອງ ການເຈົ້າ ແລ້ວເຈົ້າຫາຍຫົວໄປຢູ່ໃສ ຕອນໄທບ້ານເຂົາເຢີ້ຍ ລູກບໍ່ມີພໍ່ ລູກເມຍນ້ອຍ ເຈົ້າຮູ້ບໍ່ມັນເຈັບສ່ຳໃດ ເຈົ້າຮູ້ບໍ່ຖ້າຂ້ອຍ ບໍ່ມີພໍ່ແມ່ອ້າຍເອື້ອຍປານນີ້ຂ້ອຍຕາຍໄປແລ້ວ"

"ຂ້ອຍຂໍໂທດແຕ່ລູກຂ້ອຍບໍ່ແມ່ນລູກເມຍນ້ອຍ ເຈົ້າຄື ບໍ່ອະທິບາຍ..."

"ຊິໃຫ້ຂ້ອຍອະທິບາຍວ່າແນວໃດ ແນວພໍ່ມັນບໍ່ມາຫາ ຈັກເທື່ອ ມັນກໍບໍ່ຜິດຖ້າເຂົາຈະຄິດແນວນັ້ນ ຖ້າເຈົ້າວ່າຍັງຮັກ ລູກອີກສອງມື້ໃຫ້ຂຶ້ນມາ ເຊັນໃບຢ່າຮ້າງກັນ ແລ້ວເຈົ້າກໍໄປມີ ຊີວິດຕາມທີ່ເຈົ້າຕ້ອງການ ແລະເຈົ້າກໍບໍ່ຕ້ອງຫ່ວງ ຂ້ອຍບໍ່ສອນ ໃຫ້ລູກຊັງພໍ່ມັນດອກ ຂ້ອຍຍິນດີໃຫ້ລູກຮູ້ວ່າພໍ່ມັນຕາຍແລ້ວດີ ກວ່າໃຫ້ລູກຮູ້ວ່າມີພໍ່ທີ່ບໍ່ເຄີຍມາເຮັດໜ້າທີ່ພໍ່ເລີຍ"

ຂ້ອຍວາງສາຍໂທລະສັບພ້ອມນ້ຳຕາ ແລ້ວໂອບກອດ ລູກທີ່ກຳລັງນອນຫຼັບ

"ແມ່ຂໍໂທດເດີລູກ ທີ່ຕ້ອງຮ້ອງໄຫ້ກັບເຈົ້າທຸກຄືນ ແມ່ ບໍ່ເຂັ້ມແຂງພໍທີ່ຈະຮັກສາສະຖານະພາບຄອບຄົວທີ່ສົມບູນໃຫ້





ລູກໄດ້ ແມ່ກໍໄດ້ແຕ່ຫວັງຖ້າລູກໃຫຍ່ຂຶ້ນມາ ລູກຈະເຂົ້າໃຈໃນ ສິ່ງທີ່ແມ່ເຮັດໃນມື້ນີ້.

. . . . . . . . . . . . . . . . . .

"ສັນຍາກັບຂ້ອຍໄດ້ບໍ່ ຖ້າເຮົາແຕ່ງງານກັນໄປ ເລື່ອງ ແບບນີ້ຈະບໍ່ມີວັນເກີດຂຶ້ນຈິງໃນຊີວິດຄູ່ຂອງເຮົາ" ຂ້ອຍພັບປຶ້ມ ໄວ້ແລ້ວປິ່ນໄປເວົ້າກັບຄົນຮັກທີ່ຢູ່ຂ້າງໆ



# ເງາະປ່າປັນຍາປູ້



"ບັກເງາະປ່າປັນຍາປູ້ ກັບໄປຢູ່ປ່າພຸ້ນໄປ໋ ເງາະປ່າໜ້າດຳ ເງາະປ່າຜົມຫຍອງ ເງາະປ່າ ເງາະປ່າ"

ນີ້ເປັນຊື່ທີ່ໝູ່ໃຊ້ເອີ້ນ ແລະຄຳທັກທາຍແທນຊື່ "ສາວ" ຂອງຂ້ອຍ ຈົນກາຍເປັນຄຳປະຈຳໂຕຂ້ອຍໄປແລ້ວ(ຈະວ່າໄປຊື່ເງາະກໍດີກວ່າຊື່ ສາວ ບໍ່ຮູ້ວ່າຕອນພໍ່ແມ່ຕັ້ງຊື່ນີ້ໃຫ້ຂ້ອຍເພິ່ນຄິດແນວໃດ) ເພາະອັນທີ່ຈິງມັນກໍຖືກຄວາມເຂົາເວົ້າຫັ້ນແຫຼະ ເພາະຂ້ອຍກໍໂຕດຳ ຜົມຫຍອງ ຄືເຂົາເວົ້າແທ້ ທຳອິດທີ່ໄດ້ຍິນຂ້ອຍກໍໂມໂຫ ແລະຍາກຮ້າຍ ເຄີຍຄິດຢາກເອົາກຳປັ້ນໂຍນເຂົ້າຫວ່າງແຂ້ວໃຫ້ເຂົານອນຫຍອດນ້ຳເຂົ້າຕົ້ມຈັກທີດໃດເບິ່ງ ແຕ່ດ້ວຍຂ້ອຍເປັນຄົນຮູບຮ່າງນ້ອຍ ແລະເປັນຄົນບໍ່ມີໝູ່ຫົວດຽວກະທຽມລີບ ຖ້າຂ້ອຍເຮັດແບບທີ່ຂ້ອຍຄິດ ຄົນທີ່ຈະໄດ້ນອນຫຍອດນ້ຳເຂົ້າຕົ້ມຄືແມ່ນຂ້ອຍຄັກໆ

"ເຮີຍ! ເງາະປ່າ ມຶງມາແວ່ຫຍັງຢູ່ນີ້ ແມ່ນຖົງຫຍັງມຶງນິ ເຈ້ຍໜັງສືພິມມຶງຊິເອົາໄປເສັດກົ້ນມຶງຫວາ ບັກເງາະປ່າປັນຍາປູ້ເອີ່ຍ!" ພວກເຂົາເວົ້າແລ້ວກໍພາກັນຫົວຂວັນຂ້ອຍແລ້ວກໍຈາກໄປ ແຕ່ຂ້ອຍກໍຍັງສືບຕໍ່ຄົ້ນຂອງດີຕໍ່ໄປ

"ສາວ! ມຶງເອົາວິທະຍຸມາແຕ່ໃສແລ້ວລົດຖີບນີ້ເດໄປເອົາມາແຕ່ໃສ ຫຼືໄປລັກຂອງໃຜມາ?"

"ເຮົາເອົາມາແຕ່ກອງຂີ້ເຫຍື້ອ ບໍ່ໄດ້ໄປລັກຂອງໃຜມາ"





"ເຄື່ອງຍັງໃຊ້ໄດ້ຢູ່ແມ່ນໃຜຊິເອົາໄປຖິ້ມກອງຂີ້ເຫຍື້ອບອກຄວາມຈິງມາດຽວນີ້ໄປລັກຂອງເຂົາມາແມ່ນບໍ່?" ເວົ້າແລ້ວແສ້ຫວາຍເສັ້ນທໍ່ນິ້ວມືກໍໂຍນລົງກົ້ນຂ້ອຍບາດນຶ່ງ ເດັກນ້ອຍ 10 ປີກັ້ນນ້ຳຕາໄວ້ບໍ່ຢູ່ປ່ອຍໃຫ້ນ້ຳໃສໆຊັດອອກມາປານຄັນແທນາເຈື່ອນ ແລະນີ້ກໍບໍ່ແມ່ນເທື່ອທຳອິດທີ່ຖືກຫວາຍລົງກົ້ນເພາະຄວາມດື້ຂອງຂ້ອຍກໍບໍ່ແມ່ນງ່າຍຄືກັນ

ອາກາດແຈ່ມໃສຂອງມື້ພັກໂຮງຮຽນ ເປັນມື້ທີ່ເດັກນ້ອຍຫຼາຍຄົນລໍຄອຍມາທັງອາທິດ ສຳລັບຂ້ອຍແລ້ວມື້ພັກແມ່ນຕ້ອງໄປເລາະເກັບກະຕຸກ ພໍໄດ້ເງິນເລັກໆນ້ອຍໆ ໃຫ້ແມ່ຊື້ໝາກເຜັດເກືອແປ້ງນົວ ແລະສະຖານທີ່ຂ້ອຍມັກໄປແມ່ນແຖວຕະຫຼາດ ເພາະແຖວນັ້ນມີຮ້ານຄ້າຫຼາຍ ບາງມື້ໂຊກດີແດ່ກະໄດ້ເປັນເປົາ ບາງມື້ໂຊກບໍ່ດີກະຖືກເຂົາຕັດໜ້າໄປກ່ອນ ເປັນແບບນັ້ນຢູ່ຫຼາຍຄັ້ງ ຂ້ອຍຈຶ່ງມີການວາງແຜນຄິດໄລ່ໂມງເວລາຄັກແນ່ຄືຕ້ອງໄປແຕ່ກ່ອນເຂົາກິນເຂົ້າທ່ຽງໂດຍສະເພາະຢູ່ຮ້ານເຝີ ຮ້ານເຂົ້າປຽກ ເພາະສ່ວນຫຼາຍເຂົາຈະສັ່ງນ້ຳກິນພ້ອມແຕ່ບໍ່ແມ່ນຈະໄປນັ່ງເຝົ້າຢູ່ໜ້າຮ້ານເຂົາໃດ໋ ເພາະຖ້າເຮັດແນວນັ້ນມີຫວັງເຈົ້າຂອງຮ້ານເຂົາໄລ່ຫົວຂ້ອຍອອກພໍດີ ຂ້ອຍກໍເລີຍເລາະໆລຽບໆເບິ່ງຢູ່ແຖວຮົ່ມໄມ້ ພໍເຂົາກິນແລ້ວປຸບກະຕຸກກໍຕົກເປັນຂອງຂ້ອຍປັບ

ມື້ນີ້ກໍຄືກັບທຸກເທື່ອທີ່ຂ້ອຍອອກບ້ານມາແຕ່ເຊົ້າ ເພາະຕ້ອງຊ່ອຍແມ່ຍູ້ລໍ້ນ້ຳມາຂາຍຢູ່ໜ້າຕະຫຼາດ ແລ້ວຫຼັງຈາກນັ້ນຂ້ອຍກໍເລາະໄປຕາມພາສາ





"ແມ່ສາວໆ ຂ້ອຍເຫັນລູກເຈົ້າຢືນລົມກັບຝຣັ່ງທາງຫຼັງຕະຫຼາດພຸ້ນ ໄປເບິ່ງແມ໋ເຫັນມີລົດຕູ້ຈອດຢູ່ໃກ້ຫັ້ນໃດ໋ ຢ້ານຊິເປັນຄືຂ່າວເຂົາອອກໂທລະທັດຫັ້ນໃດ໋"

"ບັກສາວມຶງມາເຮັດຫຍັງຢູ່ພີ້ ມຶງບໍ່ຢ້ານຫວາ ຖ້າເຂົາຈັບຂຶ້ນລົດຕູ້ໄປນຳໃຜຊິຊ່ອຍມຶງໄດ້" ແມ່ເວົ້າໂດຍບໍ່ຟັງພ້ອມດຶງແຂນຂ້ອຍອອກມາ

"ແມ່! ຟັງກ່ອນ ເພິ່ນຖາມທາງຊື່ໆ"

"ເຂົາຖາມທາງ! ລະມຶງຮູ້ຊັ້ນເບາະ ມຶງເຂົ້າໃຈເຂົາຫວາ ມຶງໄປຮຽນມາແຕ່ໃສ ຢ່າມາຕົວະກູຢູ່ນີ້ໃດ໋ ໄປ໋ເມືອດຽວນີ້ ລະຢ່າໃຫ້ກູເຫັນມຶງເຮັດແບບນີ້ອີກເດີບໍ່ຊັ້ນລະຖືກແສ້ຄັກໆ" ເຖິງແມ່ຈະບໍ່ຍອມຟັງ ແຕ່ຂ້ອຍກໍຮູ້ທີ່ແມ່ຮ້າຍຄືເພາະແມ່ເປັນຫ່ວງຂ້ອຍຫຼາຍ ເພາະຕັ້ງແຕ່ຂ້ອຍຈື່ຄວາມໄດ້ກໍເຫັນມີແຕ່ແມ່ຜູ່ດຽວທີ່ເປັນທັງແມ່ແລະພໍ່ຄອຍເຮັດວຽກໜັກເພື່ອລ້ຽງດູຂ້ອຍ ເຖິງແມ່ນຈະສົງໄສ ແລະຢາກຮູ້ພຽງໃດວ່າພໍ່ແມ່ນໃຜ ພໍ່ໄປຢູ່ໃສຄືບໍ່ມາຢູ່ນຳກັນ ແຕ່ຂ້ອຍກໍບໍ່ກ້າຖາມແມ່ອີກ ເພາະນອກຈາກຈະບໍ່ໄດ້ຄຳຕອບແລ້ວ ຍັງເຮັດໃຫ້ແມ່ຕ້ອງໂສກເສົ້າທຸກໃຈນຳທຸກເທື່ອທີ່ຖາມອີກ ຂ້ອຍຈຶ່ງເລືອກທີ່ຈະບໍ່ຮູ້ເລີຍດີກວ່າ

ແລະເພື່ອສະແດງຄວາມບໍລິສຸດໃຈຂ້ອຍຈຳເປັນຕ້ອງໄດ້ພາແມ່ໄປເບິ່ງຫ້ອງຮຽນສຸດພິເສດ ທີ່ຂ້ອຍຄິດວ່າຈະບໍ່ເປີດເຜີຍມັນໃຫ້ໃຜໄດ້ຮູ້ ທຳອິດກໍຄິດວ່າແມ່ຊິຕົກຕະລຶງເມື່ອໄດ້ເຫັນ ແຕ່ຜົນສຸດທ້າຍຜັດເປັນຂ້ອຍເອງທີ່ຕ້ອງຕົກຕະລຶງ ຈົນໜ້າມ້ານ ເພາະຄຳເວົ້າຫຼັງທີ່ແມ່ເຫັນຫ້ອງຮຽນຂ້ອຍ

"ນີ້ຫວາຫ້ອງຮຽນມຶງ! ແລ້ວຢູ່ໃສຄູສອນ ກະດານ ໂຕະ ຕັ່ງມຶງ ກູເຫັນແຕ່ກອງຂີ້ເຫຍື້ອກູວ່າມຶງເສຍສະຕິໄປແລ້ວແທ້ໆ ຖ້າເປັນແບບນີ້ຮຽນຕໍ່ໄປກໍຄືຊິເສຍເງິນລ້າໆຊໍ້າອອກໂຮງຮຽນສາ" ເວົ້າແລ້ວແມ່ກໍຍ່າງອອກໄປໂດຍບໍ່ຟັງຂ້ອຍອີກເຊັ່ນເຄີຍ

ຂ້ອຍພະຍາຍາມອະທິບາຍວ່າຂ້ອຍປົກກະຕິດີບໍ່ໄດ້ເປັນບ້າເສຍຈິດແຕ່ຢ່າງໃດ ແຕ່ແມ່ກໍບໍ່ຟັງຈົນຂ້ອຍຈົບປັນຍາເລີຍຍື່ນຂໍ້ສະເໜີຂໍຮຽນໃຫ້ຈົບປ.5ກ່ອນແລ້ວຄ່ອຍຊິອອກມາຊ່ອຍວຽກ ເພາະຕອນນີ້ກໍຮຽນມາໄດ້ເຄິ່ງປີແລ້ວທຳອິດແມ່ກໍບໍ່ຍອມຈົນຂ້ອຍຕ້ອງໄດ້ໃຊ້ໄມ້ຕາຍ

"ຖ້າອອກໂຮງຮຽນກາງປີແບບນີ້ເຂົາຊິປັບໃໝຫຼາຍແສນໃດ໋ ບໍ່ເຊື່ອກະໄປຖາມນາຍຄູເບິ່ງແມ່?" ແມ່ຢຸດຄິດຢູ່ບຶດນຶ່ງ

"ເອີໆ! ຮຽນກະໄດ້ຊັ້ນບ່າ"

ຈະວ່າໂຊກເຂົ້າຂ້າງ ຫຼືບຸນເກົ່າລົ່ນທັບກໍບໍ່ຮູ້ ພໍເຂົ້າພາກຮຽນສອງ ຂ້ອຍກໍໄດ້ໄປເສັ່ງນັກຮຽນເກັ່ງວິຊາພາສາລາວຂັ້ນເມືອງ ແລະແຂວງໄດ້ທີ1 ເລີຍເຮັດໃຫ້ຂ້ອຍໄດ້ຮັບທຶນນະໂຍບາຍຮຽນຕໍ່ຈົນຈົບມັດທະຍົມປາຍ ແລະຂ້ອຍຍັງເສັງໄດ້ທຶນແບ່ງປັນຮຽນຕໍ່ວິທະຍາໄລຄູອີກ 2 ປີ (ຊັ້ນກາງ) ຫຼັງຈາກຮຽນຈົບຂ້ອຍກໍໄດ້ອອກມາສອນຢູ່ໂຮງຮຽນໃນບ້ານ ແລະທີ່ສຳຄັນຂ້ອຍໄດ້ເປີດຫ້ອງຮຽນພິເສດໃຫ້ເດັກນ້ອຍ ຫ້ອງຮຽນທີ່ມັນຫຼໍ່ຫຼອມຂ້ອຍຈາກເງາະປ່າປັນຍາປູ້ໃຫ້ເປັນ...

**ບັກເງາະປ່າປັນຍາແຫຼມ.!!**





# ນາຮົກເທິງດິນ



ຄວາມດີໃນມືພວກກູສູ້ທັ້ນຫວະ ຊິສູ້ເງິນໃນມືກູໄດ້!

. . . . . . . . . . . . . . . . . .

"ເອື້ອຍນາງ ໄດ້ຍິນວ່າເຈົ້າເຮັດວຽກໃນໂຮງງານທັ້ນດົນແລ້ວບໍ່?"

"ດົນແລ້ວ ຊິເຮັດຫຍັງ ຊິໄປເຮັດຊັ້ນເບາະ?"

"ທຳອິດກະບໍ່ຢາກເຮັດດອກ ແຕ່ຄິດໄປຄິດມາເຮົາກະຮຽນຈົບມາດົນຍັງບໍ່ມີວຽກເຮັດ ຢູ່ກະຢູ່ລ້າໆ"

"ວຽກໃນໂຮງງານແທ້ມີຫຼາຍ ແຕ່ວຽກຢູ່ຫ້ອງການແມ່ນຍັງຕ້ອງການແຕ່ນາຍບັນຊີສາງໃດ໋ ໂຕຊິເຮັດໄດ້ບໍ່ລະ"

"ໄດ້ໆ ເຮົາເຄີຍເຮັດມາກ່ອນຕອນລົງເຝິກງານ"

"ຊັ້ນກໍປະກອບເອກະສານໄປຍື່ນ ແລ້ວເອື້ອຍຊິບອກຫົວໜ້າເພິ່ນເບິ່ງເປັນພິເສດ"

ຫຼັງຈາກຍື່ນເອກະສານສອງມື້ຂ້ອຍກໍໄດ້ເຂົ້າໄປເຮັດວຽກສົມໃຈ ແລະມື້ທຳອິດຂ້ອຍຕ້ອງຕື່ນແຕ່ກ່ອນໄກ່ທັງຂັບລົດສັ່ນໜາວຢ້ອກໆຜ່າຄວາມມືດໄປດ້ວຍຄວາມຫວາດພະຫວາຄືຈັ່ງຊິມີພະລັງງານແວັບມານັ່ງຊ້ອນທ້າຍກະປານນັ້ນ ຢ້ານຊິມີຄົນມາຕີເຮັດນອນລັດຂວາງທາງກະພໍແຮງ





ແຕ່ພໍຂັບລົດເຂົ້າໄປໃນເຂດໂຮງງານທີ່ກວມເນື້ອທີ່ຫຼາຍສິບເຮັກຕາ ແສງໄຟກໍແຈ້ງຈ່າງປ່າງປານກາງເວັນ ທັງລະບົບຄວາມປອດໄພກໍໜາແໜ້ນ ທາງເຂົ້າອອກມີທາງດຽວ ແຕ່ຜູ່ຍາມເຖິງຫົກຄົນ ເຂົ້າອອກວຽກທຸກຄັ້ງຕ້ອງໄດ້ສະແກນນິ້ວມືອີກທັງກຳແພງທີ່ໜາສູງແຫງນຄໍຈົນຈໍາງ່ອນດົ້ນ

ສ່ວນພາຍໃນມີຫຼາຍສິບຕຶກແຍກອອກເປັນແຕ່ລະພະແນກ ເຊັ່ນ: ຕຶກໄຈ້ (ຂີ້ເຫຍື້ອ), ຕຶກແຍກ(ເປົາ, ແຜ່ນຜ້າເສດ) ຕຶກຕົ້ມ (ເມັດຢາງ) ເຊິ່ງມີຜູ່ຄົນເຮັດວຽກຢູ່ຕະຫຼອດຊາວສີ່ຊົ່ວໂມງ ແລະສຳຄັນແມ່ນຫ້າມໃຊ້ໂທລະສັບຖ່າຍຮູບ

ສ່ວນຂ້ອຍເຂົ້າໄປເຮັດວຽກຢູ່ໃນຕຶກ(B)ຄືສາງອຸປະກອນ (ຈຳພວກກະແຈ ແລະເຄື່ອງມືຕ່າງໆ) ຊົ່ວໂມງທຳອິດທີ່ຂ້ອຍຢູ່ ເລີ່ມຮູ້ສຶກຫາຍໃຈຝືດແລະປວດຫົວເລັກນ້ອຍ

"ຫາມາໃໝ່ດົນໄປຫາກຊິລຶ້ງດອກ"

"ອືມ.. ຂ້ອຍຍິ້ມຕອບແບບແຫ້ງໆ"

"ຕຶກນີ້ອ່າວໄຄບໍ່ໄດ້ຢູ່ໃຫ້ຕຶກຕົ້ມ ມັນບໍ່ຂິວຫຼາຍ"

"ຍັງບໍ່ຂິວຫຼາຍຫວານີ້?" ຂ້ອຍຖາມດ້ວຍສີໜ້າທີ່ຫຍຸ້ງເຫຍີງປານໄກ່ໄຈ້ໄໝ

ເຄິ່ງມື້ຜ່ານໄປ ຂ້ອຍເລີ່ມຫາຍໃຈຝືດ ທັງປວດຮາກຂະຫຍ້ອນແຕ່ເຮືອນຢູ່ບໍ່ໄກເລີຍໄດ້ອອກມາພັກຫາຍໃຈແດ່ ອີກຫ້າຊົ່ວໂມງຫຼັງທ່ຽງຂ້ອຍຕ້ອງທົນຢູ່ກັບສະພາບທີ່ທັງຂິວບໍ່ຈັກຂິວຢາງ ຂິວເຫຼັກສາລະພັດຂິວແລະຍັງສຽງດັງໜວກຫູຢູ່ຕະຫຼອດເວລາ ຢູ່ພາຍໃນຫ້ອງສາງຫຼຽວອອກໄປນອກເຫັນແຕ່ຂີ້

ເຫຍື້ອກອງທີ່ພູເຂົານັບສິບໆກອງລຽນກັນຊ່າຍລ່າຍຂາວເອີດເຕີດ

ຫຼັງຈາກປະຄອງສັງຂານຕົວເອງຢູ່ຄົບ 5 ຊົ່ວໂມງ ຂ້ອຍກໍຟ້າວອອກມາຈາກທີ່ນັ້ນທັນທີ ພໍແຕ່ມາຮອດເຮືອນເກືອບບໍ່ທັນຈອດລົດຮາກຊັດອອກກັບບາດ ປວດຈີ່ວໆຂຶ້ນສະໝອງຄືຫົວຈະລະເບີດຫຼຽວເບິ່ງເຮືອນກໍປິ່ນລ່ວງຂວ່າງໆ ແລງນັ້ນຂ້ອຍກິນຫຍັງບໍ່ໄດ້ເລີຍ ຖ້າບໍ່ທີ່ຢາລະງັບສີ່ເມັດນັ້ນຈ້າງກໍຫຼັບຕານອນບໍ່ໄດ້ ແຕ່ເຖິງປານນັ້ນຮຸ່ງເຊົ້າມາ ຂ້ອຍກໍຍັງຫອບສັງຂານໄປວຽກຄືເກົ່າ ເປັນເວລາເກືອບເດືອນຈົນໃນທີ່ສຸດຮ່າງກາຍຂ້ອຍກໍຍອມຈຳນົນເອງ

"ເປັນແນວໃດນ້ອງ ຈົນວ່າໄດ້ລົ້ມໝອນນອນເສື່ອພຸ້ນຫວາ"

"ແຕ່ມັນກໍຄຸ້ມເດະກັບສິ່ງທີ່ໄດ້ມາ"

"ແມ່ນເຂົາໃຫ້ເງິນເດືອນຫຼາຍປານໃດເດເນາະ"

"ເລື່ອງເງິນເດືອນບໍ່ສຳຄັນເທົ່າເລື່ອງນີ້ດອກ ແຕ່ວ່າອ້າຍຕ້ອງຊ່ວຍນ້ອງໃດ່" ອ້າຍຄຳພຸດເຮັດສີໜ້າງົງໃນສິ່ງທີ່ຂ້ອຍເວົ້າ

. . . . . . . . . . . . . . . . . . .

*"ສາຍນ້ຳໄຫຼເຢັນທີ່ເຄີຍເປັນບ່ອນຊອກຢູ່ຫາກິນຂອງໄທບ້ານດຽວນີ້ກາຍເປັນແຫຼ່ງເພາະພັນເຊື້ອພະຍາດ ແຄມທ່າທີ່ເຄີຍຂຽວອຸ່ມທຸ່ມດ້ວຍສາລີສາລອຍ ໝາກຖົ່ວ ໝາກແຕງ*





*ດຽວນີ້ມີພຽງຕົ້ນຫຍ້າແຫ້ງໆແສດໆ ໄຮ່ນາຕາຕ້າຫຼາຍສິບເຮັກຕາບໍ່ສາມາດປູກເຂົ້າໄດ້ ຫ້ວຍຮ່ອງໜອງບຶງບ່ອນທີ່ບໍ່ມີນ້ຳໄຫຼປູປາຕາຍກ້ຽງບໍ່ຍັງ ສຸຂະພາບປະຊາຊົນກໍໄດ້ຮັບຜົນກະທົບໂດຍສະເພາະເລື່ອງມົນລະພິດທາງອາກາດ ເຊິ່ງກະທົບໂດຍກົງຕໍ່ລະບົບທາງຫາຍໃຈແລະນີ້ກໍຄືຫຼັກຖານທັງໝົດທີ່ຂ້າ-ພະເຈົ້າຮວບຮວມມາໄດ້ ແລ້ວກໍຫວັງຢ່າງຍິ່ງວ່າມັນຄົງມີນ້ຳໜັກພໍທີ່ຈະໃຫ້ທ່ານຊ່ວຍພິຈາລະນາແລະແກ້ໄຂດ້ວຍຄວາມເປັນທຳ"*

ຜ່ານໄປນຶ່ງອາດທິດ ຫຼັງຈາກໜັງສືຮ້ອງຮຽນຖືກສະເໜີຂຶ້ນໄປຫາທາງຂັ້ນເທິງ ຂ້ອຍກໍໄດ້ຮັບບັດເຊີນໃຫ້ເຂົ້າໄປພົບຢູ່ຫ້ອງການ

"ຫຼັງຈາກທີ່ພວກເຮົາໄດ້ພິຈາລະນາເບິ່ງເອກະສານຢ່າງຖີ່ຖ້ວນ ແລະບວກກັບການລົງສຳຫຼວດໂຮງງານ ທັງເກັບກຳຂໍ້ມູນຈາກປະຊາຊົນ ເຫັນວ່າມັນບໍ່ກົງກັນກັບຫຼັກຖານທີ່ເຈົ້າສະເໜີມາ ສະນັ້ນທາງເຮົາຈຶ່ງບໍ່ສາມາດສັ່ງໃຫ້ເຂົາປິດ ຫຼືຢຸດດຳເນີນການໄດ້ ເພາະມັນຈະເຮັດໃຫ້ຄົນງານຫຼາຍຮ້ອຍຄົນຕ້ອງຕົກງານ"

"ເປັນໄປໄດ້ແນວໃດ ເພາະທັງຮູບ ແລະວີດີໂອກໍຊີ້ໃຫ້ເຫັນຊັດເຈນແລ້ວວ່າ ອ່າງບຳບັດນ້ຳເສຍຍັງບໍ່ໄດ້ຕາມມາດຕະຖານ ມວນນ້ຳເປື້ອນຈຳນວນຫຼາຍຖືກລັກປ່ອຍລົງແມ່ນ້ຳທັງການປ່ອຍຄວັນຈາກການເຜົາໄໝ້ທີ່ສ້າງມົນລະພິດຮ້າຍແຮງຕໍ່ຊັ້ນບັນຍາກາດ ແລະຍັງຄຳຮ້ອງທຸກຈາກປະຊາຊົນອີກ





ຈຳນວນຫຼາຍ ແລ້ວໃນໃບຢັ້ງຢືນສຸຂະພາບກໍຊີ້ໃຫ້ເຫັນຊັດເຈນແລ້ວວ່າຫຼັງຈາກທີ່ຂ້າພະເຈົ້າເຂົ້າໄປເຮັດວຽກໃນນັ້ນບໍ່ເຖິງເດືອນສຸຂະພາບຂ້າພະເຈົ້າເປັນແນວໃດ ທີ່ສຳຄັນຢູ່ໂຮງງານທຸກຄົນແມ່ນເຮັດວຽກບໍ່ຫຼຸດ 12 ຊົ່ວໂມງ/ມື້ ແຕ່ເຂົາພັດຈ່າຍເງິນເດືອນສ່ຳຄ່າແຮງຂັ້ນຕ່ຳທີ່ເຮັດ 8 ຊົ່ວໂມງ/ມື້ ນີ້ມັນກໍເປັນຂໍ້ບົ່ງຊີ້ໃຫ້ເຫັນຊັດແລ້ວວ່າ... ຂ້ອຍເວົ້າຍັງບໍ່ທັນສຸດຄວາມຊ້ຳກໍມີສັນຍານມືບອກໃຫ້ຂ້ອຍຢຸດເວົ້າ"

"ເອົາລະໆ! ພໍກ່ອນ ຂ້ອຍວ່າເຈົ້າໃສ່ອາລົມຫຼາຍເກີນໄປ ຂໍເຊີນກັບໄປກ່ອນສາ ເຊີນ... ເວົ້າແລ້ວກໍປິ່ນໜ້າໜີເຮັດຄືບໍ່ມີຂ້ອຍຢູ່ໃນຫ້ອງນັ້ນ"

. . . . . . . . . . . . . . . . . .

"ອ້າຍຄຳພຸດຜົນມັນຄືອອກມາເປັນແບບນີ້ ສິ່ງທີ່ລົງທຶນລົງແຮງທຸ່ມເທໄປມັນສູນເປົ່າໝົດເລີຍ!"

"ອ້າຍເອງກໍຈົນປັນຍາທີ່ຈະແກ້ເພາະຕອນນຳທີມງານລົງໄປກວດການັ້ນ ມັນເຮັດໃຫ້ອ້າຍເຫັນແລ້ວວ່າ ອຳນາດເງິນເຂົາສູງກວ່າຄວາມຍຸຕິທຳອີ່ຫລີ..."

ຂ້ອຍນັ່ງແນມທ້ອງຟ້າທີ່ມືດມົວເພາະພາຍຸຝົນທີ່ກະໜ່ຳລົງມາດ້ວຍຄວາມສິ້ນຫວັງ ແຕ່ແລ້ວບໍ່ດົນທ້ອງຟ້າກໍໄດ້ເປີດແຈ້ງ ນຳແສງຂອງຮຸ່ງກິນນ້ຳທອດຜ່ານຮ່ອມພູເຮັດໃຫ້ຂ້ອຍໄດ້ເຫັນຄວາມງົດງາມຂອງທ້ອງຟ້ານັ້ນອີກຄັ້ງ.







# 86. 400 ວິນາທີ



ຍິນສຽງຟືນຟັດຕ້ອງ  ເຄືອຫູກເອນໄກວ
ພໍນາງມືນຕາດູ  ມືດມົວມິທັນແຈ້ງ
ແສງຕະກຽງໄຟຂ້າງ  ມານດາເສີມແຕ່ງ
ໃຫ້ແສງເຍືອງອື່ນອ້ອຍ  ພຽນຄ້ອຍຕຳແພ

ລາຍທີ່ແມ່ສອດກ້ຽວ  ເກາະຂອດຊອນໄໝ
ມີທັງລາຍເຮືອໄຟ  ນາກເຊີງແຊມຊ້ອນ
ອອນຊອນເດພືນຜ້າ  ນາຄາກ້ຽວກ່ອມ
ທັງນາລີນາດນ້ອງ  ລົງຫຼິ້ນແມ່ນະທີ

ມີພະຍາຄຸດແຮ້ງ  ຮີບແສ່ວຊີງນາງ
ແລ້ວທັງມີກຸມພັນ  ແອ່ວເອົາອາແກ້ວ
ແລ້ວມີສີໂຫທ້າວ  ສິນໄຊທະນູຄູ່
ໄປສູ້ເອົາບາດໄທ້  ຄືນບ້ານບ່ອນເດີມ





ແມ່ຍັງເຄີຍບອກໄວ້  ລາຍແຜ່ນແພລາວ
ເກີດຈາກພູມປັນຍາ  ຍ່າເດີມພູມເຄົ້າ
ເພິ່ນຍຶດເອົາໄໝເສັ້ນ  ລົງລາຍແຕ້ມແຕ່ງ
ເກາະຂີດລົງແຜ່ນຜ້າ  ຈາລຶກໄວ້ແມ່ນເລື່ອງລາວ

ພໍຕາເວັນສ່ອງຟ້າ  ເຂົ້າຫໍ່ລົງຖົງ
ມີແຕ່ພຽງເກືອຂີງ  ແມ່ກຽມເອົາໄວ້
ຫົວສິງໄຄມີພ້ອມ  ໃບຕອງຄຽນຫໍ່
ແຈ່ວງອຍປອງໃສ່ເຂົ້າ  ສວນຮົ້ວບ່ອນແມ່ໄປ

ຈົນຕາເວັນລັບຟ້າ  ມານດາຄ່ອຍຄືນເຮືອນ
ດູເໝືອນມີຂອງໜັກ  ຫາບມາແຕ່ໄກພຸ້ນ
ຟືນໃຫຍ່ທັງຫຼືວນ້ອຍ  ຄອນມາເຕັມບ່າ
ສາຍຕາຫຼຽວຈອບຈ້ອງ  ຄອງຖ້າແລ່ນຕ້ອນທາງ

ພໍແມ່ວາງເຄື່ອງໄວ້  ມືກໍ່ຄຳລົງຖົງ
ຈົກເອົາໝາກເກັນຫອມ  ໜ່ວຍງາມດຳກ້ຽງ
ແລ້ວກໍຍໍວາງໃຫ້  ແພງຂວັນອີແມ່
ກິນສາເດີລູກຫ້າ  ຂອງຕ້ອນຈາກດົງ





ຕົກຮອດແລງຄ່ຳຄ້ອຍ  ຟືນອ່ອຍເຕົາດັງ
ແມ່ກໍພຽນຄົວກິນ  ແຕ່ງແລງໃຫ້ນາງຫ້າ
ຫອມກິ່ນອາຍຄວັນກຸ້ມ  ປູປາປີ້ງຈີ່
ສາລີທັງໃຫຍ່ນ້ອຍ  ພຽງພ້ອມແມ່ຍໍມາ

ກິນສາເດີລູກຫ້າ  ທາງແມ່ຊິເລັມຫົວ
ຊີ້ນປາຂາວຫວານນວນ  ແມ່ມັນກິນມິໄດ້
ແມ່ຊິຄອຍເລັມກ້າງ  ເສີມທາງກະດູກແມ່
ຜັກລວກແຈ່ວແຊບຊ້ອຍ  ແກງນ້ຳແມ່ນລ່ອງຄໍ

ບາງເທື່ອແມ່ກິນແຕ່ນ້ຳ  ຫຼາຍຈອກເປັນໂຖ
ແລ້ວກໍລຸກເດີນໜີ  ອີ່ມເຕັມຕຶງທ້ອງ
ບາງເທື່ອກໍບາຍເອົາເຂົ້າ  ເກືອໂຮຍອຸ່ນອຸ່ນ
ແລ້ວກໍປະຈີ່ງໄວ້  ປາຊີ້ນແມ່ນລູກກິນ

ເມື່ອເຂົ້າລົງອີ່ມທ້ອງ  ຕອນຄ່ຳແລງມາ
ແມ່ກໍບອກພຽນຫາ  ຄູ່ຕຳລາຮຽນຮູ້
ແມ່ຢາກສອນລູກນ້ອຍ  ແພງຂວັນຮຽນອ່ານ
ກ ຂ ຄ ໃຫ້ລູກຮູ້  ເສຍດ້ານແມ່ອ່ານບໍ່ເປັນ





ແມ່ຈຶ່ງພຽນຊອກຄົ້ນ  ນິທານເກົ່າຄືຫຼັງ
ທັງຄຳສອນ  ສາດສິນການຄ້າ
ມີທັງທວາຍບັນຫາຂໍ້  ເດີມດາຄັ້ງເກົ່າ
ສອງຜູ້ເຖົ້າລຽບເລົ້າ  ສອງສິ້ນບໍ່ເຫັນ ແມ່ນຫຍັງ?

ອີກທັງຟັງເລື່ອງພ້ອມ  ພຣະເວດສັນດອນ
ມີທັງກອນສິນໄຊ  ຮຸ່ງເຈືອງນາງຫ້າ
ທັງສີດາລາມອ້າຍ  ພະຍາສິງເຈົ້າປ່າ
ມີທັງຜະຫຍາຕໍ່ຖ້ອຍ  ສາວກ້ຽວກ່ອມຊາຍ ນັ້ນນາ

ບາດຍາມລູກປ່ວຍໄຂ້  ຄືງອຸ່ນມືເຢັນ
ແມ່ກໍເປັນທັງໝໍ  ຊອກຍຸກຢາມາແກ້
ທັງແພມົນຈຸບນ້ຳ  ບາຍຄີງລູກອ່ອນ
ພຽນຢູ່ຈົນຮຸ່ງເຊົ້າ  ຄີງໄຂ້ລູກຄ່ອຍເຢັນ

ເຫັນເປັດໄກ່ຢູ່ລົກເລົ້າ  ເຂົ້າຢູ່ໃນເຢຍ
ແພລາຍຍັງຄາເຄືອ  ບວບນອຍຍັງຄາຄ້າງ
ທັງດິນດອນຕອນຫຍ້າ  ແພວາຄ່າສອກ
ແມ່ກໍເຫຖອດຖິ້ມ  ຂາຍກ້ຽງບໍ່ຍັງ

ໄດ້ຟັງຄຳແມ່ເວົ້າ　　ນ້ຳຕາຫຼັ່ງລິນໄຫຼ
ຫົວໃຈເປັນດວງດຽວ　　ກອດເຄືອເຟືອຝັ້ນ
ລູກເຈັບແມ່ເຈັບດ້ວຍ　　ກາຍາຮຽງຮ່ວມ
ແມ່ນເສຍເງິນໝື່ນລ້ານ　　ບົວເຈົ້າແມ່ຍອມ

ແມ່ຍັງສອນບອກໄວ້　　ຄຸນຄ່າຂອງຄົນ
ຈົ່ງພຽນທຳຄວາມດີ　　ດັ່ງສະເໜີແສງກ້າ
ຢ່າແຕ່ມົວເມົາຫຼິ້ນ　　ແນວເພີນລາຍຕ່າງ
ທາງເດີນແມ່ຖາງຖາກໄວ້　　ແປນກ້ຽງບໍ່ຄາ

ແມ່ເອີຍ ຄຸນແມ່ມີມາກລົ້ນ　　ເກີນກວ່າຄະນານັບ
ຈັບແຜ່ນດິນພູຜາ　　ຕໍ່ລວມກໍຍັງໜ້ອຍ
ໃຫ້ຜືນຟ້າເປັນໃບເຈ້ຍ　　ນະທີຫຼວງເປັນເອກ
ເຂົາສຸເມນເປັນກັ່ນກ້ານ　　ຂຽນແຕ້ມກໍ່ບໍ່ພໍ ດອກນາ

1 ມີນາ 2020



# ຄຳຂອບໃຈ

ຂອບໃຈເດີ້ຄວາມເຈັບປວດທີ່ມາສ້າງຄວາມເຂັ້ມແຂງໃຫ້ຂ້ອຍເຕີບໂຕ ຂອບໃຈຄົນທີ່ຄ່ອຍຢຽບຊ້ຳຕອນທີ່ຂ້ອຍລົ້ມ ຂອບໃຈຄຳດູຖູກ ແລະສາຍຕາທີ່ຢຽບຫຍາມ ຂອບໃຈຄວາມຜິດຫວັງທີ່ເຮັດໃຫ້ຂ້ອຍຮັກແລະເຫັນຄ່າຕົວເອງຫຼາຍຂຶ້ນຂອບໃຈມືທີ່ຊ່ອຍດຶງຂ້ອຍລຸກອອກຈາກກອງປະຕິກູນທີ່ເນົ່າເໝັນ ຂອບໃຈຄົນທີ່ຄອຍຮັບຟັງທຸກເລື່ອງລາວທີ່ຂ້ອຍລະບາຍອອກໂດຍບໍ່ມີເບື່ອ (ແອະ! ຫຼືວ່າຈະເບື່ອແຕ່ບໍ່ກ້າເວົ້າ ເອົາ!ຢ່າເທາະ) ແລະກໍຂອບໃຈທຸກສິ່ງທຸກຢ່າງທີ່ເຂົ້າມາເຮັດໃຫ້ຂ້ອຍເຂົ້າໃຈຊີວິດຫຼາຍຂຶ້ນ ຂອບໃຈເດີ້! ຂອບໃຈຫຼາຍໆ! ໂອ່ຍນໍ້! ເວົ້າປານໃນລະຄອນນ້ຳເນົ່າເອົາໂລດ ຂ້ອຍກະດາຍ!.

ເອົາລະໆ! ຊິຂອບໃຈແທ້ໆລະບາດນີ້!

ຂໍຂອບໃຈພະອາຈານ ປອ ໄພວັນ ມາລາວົງ (ລູກດອນກະເດັນ) ທີ່ຊ່ອຍຝົນປາຍປາກກາ ດອກຄູນ ນະ ຊຽງຂວາງສະເໜີມາຈົນມີຄວາມຄົມຄາຍຂຶ້ນ(ຄິດເອງທີ່ວ່າຄົມ)ທັງຊ່ອຍບັນນາທິການເຫຼັ້ມນີ້ໃຫ້ອີກດ້ວຍ ຖ້າມີບ່ອນໃດບໍ່ຄັກບໍ່ແມ່ນແມ່ນບັນນາທິການເດີ້! ຢອກໆໆ



ແລ້ວກໍຂອບໃຈທຸກກຳລັງໃຈ ແລະທຸກຄຳຕິຊົມທີ່ທຸກຄົນສົ່ງມາໃຫ້ ແລະຄອຍຕິດຕາມຜົນງານໃນເຟັສບຸກມາໂດຍຕະຫຼອດ ແນວໃດກໍແນວລະຂໍຝາກຊ່ອຍຕິຕາມເພສ(**ILove-Me ຮັກຕົວເອງໃຫ້ເປັນ)** ເລີຍສາເບາະ ແລ້ວເຂົ້າໄປກົດໄລ້ (Like) ໄລ້ເດີບໍ່ແມ່ນກົດໄລ່ກັນໃດ່!

ແລະສຸດທ້າຍຕ້ອງຂໍຂອບໃຈທ່ານທີ່ອົດທົນອ່ານມາຈົນເຖິງໜ້ານີ້ (ລະຍັງອີກສອງໜ້າເດີ ຊ້ຳເປີດອ່ານໃຫ້ໝົດສາແລ້ວຄ່ອຍວາງໄວ້ເດີ) ແລະຫວັງວ່າທຸກເລື່ອງທີ່ຜ່ານມາມັນຈະສ້າງຮອຍຍິ້ມ ແລະຄວາມສຸກໃຫ້ທ່ານບໍ່ຫຼາຍກໍໜ້ອຍນໍ້

ແລະຂອບໃຈເດີ້ ທີ່ຍິ້ມໃຫ້ກັນ! ເອົາ! ກະຍິ້ມທະແມ! ຍິ້ມໆໆໆ.......... ຫັ້ນແນ່! ຍິ້ມແລ້ວ!

**ດ້ວຍຮັກ ແລະເຄົາລົບ**
**ດອກຄູນ ນະ ຊຽງຂວາງ**



## ກ່ຽວກັບຜູ້ຂຽນ



**ດອກຄູນ ນະ ຊຽງຂວາງ**

ຫຼາຍຄົນມັກຖາມວ່າ ເປັນຄົນຊຽງຂວາງບໍ! ທີ່ຈິງຂ້າພະເຈົ້າກໍເປັນຄົນທຸກທີ່ຫັ້ນແລ້ວ! ຢອກໆ...!!

***ທີ່ໃສ່ນາມປາກການີ້ກໍຍ້ອນວ່າ*** ເຊື້ອສາຍວົງຕະກູນແມ່ນໄທຊຽງຂວາງແທ້ຮ້ອຍເປີເຊັນ ແຕ່ຍ້ອນໜີຕາຍຈາກສົງຄາມມາຂ້າພະເຈົ້າຈຶ່ງໄດ້ມາເກີດ ແລະໃຫຍ່ຢູ່ທີ່ ບ້ານ ແກ້ວກູ່, ເມືອງແກ້ວອຸດົມ, ແຂວງ ວຽງຈັນພື້ ໃນວັນທີ 27 ພຶດສະພາ 1994.

ຂ້າພະເຈົ້າເລີ່ມຈັບປາກກາຂຽນທຳອິດໃນປີ 2016 ທີ່ສວນໄຜ່ພັນກໍ ແລະກໍມີຜົນ 2 ເຫຼັ້ມອອກຮັບສັງຄົມ ໃນຊຸດໂຮມເລື່ອງສັ້ນ **ປິດສາໜາຮັກ** ແລະ ບົດບັນທຶກ **ຄວາມເຈັບປວດທີ່ງົດງາມດ້ານການສຶກສາ**

ທີ່ບ້ານແກ້ວກູ່ ແມ່ນມີແຕ່ ອະນຸບານ - ມ 7 ຂ້າພະເຈົ້າເລີຍບໍ່ໄດ້ອອກໄປຮຽນໄກ. ຈົນວ່າໄດ້ມາສຶກສາຕໍ່ຢູ່ທີ່ ວິທະຍາໄລຄູບ້ານເກີນ ສາຍຄູປະຖົມ 12+2 ແລ້ວຈົບໃນປີ 2015.

ສ່ວນປັດຈຸບັນຂ້າພະເຈົ້າ ເປັນບັນນາຮັກຢູ່ໂຮງຮຽນນານາຊາດລາວໃນນະຄອນຫຼວງວຽງຈັນ.




1




2

ເຮົາທີ່ຢູ່ໃນ”ຄຳນິນທາ”

ນັ້ນບໍ່ແມ່ນຕົວຕົນທີ່ແທ້ຈິງຂອງເຮົາ

. . . . . . . . . . .

ສິ່ງທີ່ດີທີ່ສຸດໃນຊີວິດ

ຄືການໄດ້ຮັບ “ໂອກາດ” ແລະການທີ່ມີຄົນໄດ້ເຫັນ

“ຄຸນຄ່າ” ທີ່ແທ້ຈິງຂອງເຮົາ

. . . . . . . . . . .

ຖ້າມື້ນີ້ເຮົາບໍ່ຊື້ “ຄວາມຮູ້” ໃຫ້ຕົວເອງ

ມື້ໜ້າເຮົາຈະຕ້ອງຈ່າຍ “ຄ່າໂງ່” ທີ່ແພງກວ່າ